# ສັນຍາ

# ແລະ

# ອະນຸສັນຍາ

## ກ່ຽວກັບການຟື້ນຟູສັນຕິພາບ

## ແລະປະຕິບັດຄວາມຖືກຕ້ອງປອງດອງຊາດຢູ່ລາວ

## ຄັ້ງວັນທີ່ ໒໑ ກຸມພາ ແລະ ໑໔ ກັນຍາ

## ໑໙໗໓

ຈັດພິມໂດຍ

ກະຊວງຖແລງຂ່າວ, ໂຄສະນາການ, ແລະທ່ອງທ່ຽວ



ພຣະບາດສົມເດັດ ພຣະເຈົ້າມະຫາຊີວິດ ສີສວ່າງວັທນາ



ສະເດັດເຈົ້າ ສຸວັນນະພູມາ ນາຍົກຣັຖມົນຕີ ແຫ່ງ ພຣະຣາຊອານາຈັກລາວ



ສະເດັດເຈົ້າສຸພານຸວົງ ປະທານ ຄນະມົນຕີປະສົມການເມືອງແຫ່ງຊາດ



ພິທີລົງນາມ ຢ່າງເປັນທາງການ ໃນສັນຍາຟື້ນຟູສັນຕິພາບ ວັນທີ່ ໒໑ ກຸມພາ ໑໙໗໓



ພິທີລົງນາມ ຢ່າງເປັນທາງການ ໃນອະນຸສັນຍາ ຂອງສັນຍາ ຟື້ນຟູສັນຕິພາບ ວັນທີ່ ໑໔ ກັນຍາ ໗໓

# ສັນຍາ

ກ່ຽວກັບ ການຟື້ນຟູ ສັນຕິພາບ

ແລະ

ປະຕິບັດ ຄວາມຖືກຕ້ອງປອງດອງຊາດຢູ່ລາວ

(໒໑ ກຸມພາ ໑໙໗໓)

24/VII
ຫ້າມຈຳໜ່າຍ

# ສັນຍາ

## ກ່ຽວກັບການຟື້ນຟູ ສັນຕິພາບ ແລະປະຕິບັດຄວາມຖືກຕ້ອງປອງດອງຊາດຢູ່ລາວ

ເພື່ອຕອບສນອງ ພຣະຣາຊປະສົງ ອັນສູງສົ່ງ ຂອງພຣະບາດສົມເດັດພຣະເຈົ້າມະຫາຊີວິດ ແລະຄວາມມຸ້ງມາດ ປາຖນາ ອັນແຮງກ້າ ຂອງປະຊາຊົນ ບັນດາຊົນຊາດ ໃນທົ່ວປະເທດ ທີ່ຫວັງຢາກຢຸດຕິ ສົງຄາມລົງໂດຍໄວ, ຟື້ນຟູແລະຮັກສາ ສັນຕິພາບໄວ້ຢ່າງໝັ້ນຄົງ, ປະຕິບັດຄວາມຖືກຕ້ອງປອງດອງຊາດ,ເຮັດໃຫ້ປະເທດຊາດເປັນເອກພາບ, ສ້າງປະເທດລາວໃຫ້ເປັນປະເທດສັນຕິພາບ, ເອກຣາຊ, ເປັນກາງ, ປະຊາທິປະໄຕ, ເອກພາບ ແລະວັທນາຖາວອນ ເພື່ອປະກອບສ່ວນ ອັນຕັ້ງໜ້າເຂົ້າໃນການປັບປຸງ ສັນຕິພາບ ໃນອິນດູຈີນ ແລະອາຊີ ອາຄະເນ.

ບົນພື້ນຖານ ຂອງສັນຍາເຈນີວ ປີ ໑໙໖໒ ກ່ຽວກັບລາວ ແລະສະພາບການຕົວຈິງຢູ່ລາວ ໃນປັຈຈຸບັນ.

ຝ່າຍຣັຖບານວຽງຈັນ ແລະຝ່າຍບັນດາກຳລັງຮັກຊາດ ໄດ້ຕົກລົງເປັນເອກສັນກັນດັ່ງລຸ່ມນີ້:

## ພາກ ໑

## ວ່າດ້ວຍບັນດາຫລັກການທົ່ວໄປ

ມາດຕາ ໑.-

ກ.) ເຈດຈຳນົງ ຂອງປະຊາຊົນລາວ ແມ່ນເດັດດ່ຽວປົກປັກຮັກສາ ແລະປະຕິບັດບັນດາສິດ ພື້ນຖານແຫ່ງຊາດ ອັນສັກຣະບູຊາຂອງຕົນ ທີ່ບໍ່ມີຜູ້ໃດ ຈະລ່ວງລະເມີດໄດ້.

ຄື: ເອກຣາຊ, ອະທິປະໄຕ, ເອກະພາບ, ແລະພືນແຜ່ນດິນ ອັນຄົບຖ້ວນຂອງລາວ.

ຂ) ຖແລງການ ວ່າດ້ວຽຄວາມເປັນກາງຂອງລາວ ສບັບ ວັນທີ່ ໙–໗–໑໙໖໒ ແລະສັນຍາເຊີແນວ ປີ ໑໙໖໒ ກ່ຽວກັບລາວ ເປັນພື້ນຖານອັນຖືກຕ້ອງ ຂອງນະໂຍບາຽ ການຕ່າງປະເທດ ສັນຕິພາບ, ເອກະຣາຊ ແລະເປັນກາງ ຂອງພຣະຣາຊອານາຈັກລາວ; ບັນດາ ຝ່າຍທີ່ກ່ຽວຂ້ອງໃນລາວ ອະເມຣິກາ, ໄທ ແລະປະເທດນອກອື່ນໆ ຕ້ອງເຄົາຣົບນັບຖື ແລະ ປະຕິບັດຕາມຢ່າງເຂັ້ມງວດ.

ວຽກງານພາຍໃນຂອງລາວ ຕ້ອງແມ່ນຄົນລາວ ເປັນຜູ້ແກ້ໄຂເອົາເອງ, ບໍ່ໃຫ້ມີການ ແຊກແຊງ ຂອງປະເທດນອກ.

ຄ) ເພື່ອຈຸດປະສົງອັນສູງສົ່ງ ທີ່ແນໃສ່ຟື້ນຟູສັນຕິພາບ, ປັບປຸງເອກະຣາຊ ປະຕິບັດ ຄວາມຖືກຕ້ອງປອງດອງຊາດ ແລະເຮັດໃຫ້ປະເທດຊາດ ເປັນເອກະພາບ, ຈາກສະພາບການ ຕົວຈິງ ປະຈຸບັນຢູ່ໃນປະເທດລາວ ທີ່ມີສອງເຂດ ອັນຢູ່ພາຍໃຕ້ການກວດກາ ຂອງສອງຝ່າຍ. ນັ້ນ, ບັນຫາພາຍໃນຂອງລາວ ຕ້ອງໄດ້ຮັບການແກ້ໄຂຕາມຈິດໃຈແຫ່ງຄວາມຖືກຕ້ອງປອງ ດອງຊາດ, ບົນຫລັກການສເມີພາບ, ເຄົາຣົບນັບຖືຊຶ່ງກັນແລະກັນ, ບໍ່ມີຝ່າຍໃດບີບບັງຄັບ ແລະກືນກິນຝ່າຍໃດ

ງ) ເພື່ອປົກປັກຮັກສາ ຄວາມເປັນເອກະຣາຊ ແລະອະທິປະໄຕແຫ່ງຊາດ, ປະຕິບັດ ຄວາມຖືກຕ້ອງປອງດອງຊາດ ແລະເຮັດໃຫ້ປະເທດຊາດ ເປັນເອກະພາບ, ຕ້ອງປະຕິບັດຢ່າງ ສຸດຂີດ ບັນດາສິດເສຣີພາບ ປະຊາທິປະໄຕ ຂອງປະຊາຊົນອັນປະກອບດ້ວຍ: ສິດເສຣີພາບ ສ່ວນບຸກຄົນ, ເສຣີພາບ ໃນການເຊື່ອຖື, ເສຣີພາບໃນການປາກເວົ້າ, ເສຣີພາບໃນການ ຂີດຂຽນ, ເສຣີພາບໃນການ ຮ່ວມຊຸມນຸມ, ເສຣີພາບໃນການສ້າງຕັ້ງພັກຝ່າຍແລະ ອົງການ ຈັດຕັ້ງການເມືອງ, ເສຣີພາບໃນການອອກສມັກຮັບເລືອກຕັ້ງ ແລະປ່ອນບັດເລືອກຕັ້ງ, ເສຣີ ພາບໃນການໄປມາ ເສຣີພາບໃນການຕັ້ງພູມລຳເນົາ, ເສຣີພາບໃນການສ້າງສາວິສາຫະກິດ ແລະ ສິດເປັນເຈົ້າຂອງຊັບສິນສ່ວນຕົວ, ຕ້ອງລົບລ້າງທຸກກົດໝາຍ, ທຸກຂໍ້ກຳນົດ ແລະທຸກ ການຈັດຕັ້ງ ອັນຝືນຕໍ່ບັນດາສິດເສຣີພາບ ດັ່ງກ່າວນັ້ນ.

# ພາກ ໑

## ບັນດາຂໍ້ມາດຕາ ກ່ຽວກັບການທະຫານ

ມາດຕາ ໑- ເລີ່ມຕັ້ງແຕ່ເວລາ ໑໘ (ສິບສອງ) ໂມງ, ວັນທີ ໒໘ (ຊາວສອງ) ເດືອນ ກຸມພາ ປີ ໑໙໗໓, (ຕາມເວລາ ວຽງຈັນ) ໃຫ້ປະຕິບັດການຢຸດຍິງ ຢູ່ກັບບ່ອນ, ທັງໝົດແລະພ້ອມກັນໃນທົ່ວແຜ່ນດິນລາວ, ໃນນັ້ນມີ:

ກ) ຕ່າງປະເທດຢຸດເຊົາຢ່າງສິ້ນເຊີງ ແລະຖາວອນ ການຖິ້ມລະເບີດເທິງແຜ່ນດິນລາວ ທັງໝົດຢຸດເຊົາທຸກການແຊກແຊງ ແລະຮຸກຮານລາວ, ແລະ ຢຸດເຊົາການຕິດພັນທຸກຢ່າງ ທາງດ້ານການທະຫານ ຢູ່ໃນປະເທດລາວ.

ຂ) ບັນດາກຳລັງປະກອບອາວຸດ ຂອງນອກປະເທດນອກ ຢຸດເຊົາທຸກການເຄື່ອນໄຫວທາງທະຫານ ຢູ່ໃນປະເທດລາວ ຢ່າງສິ້ນເຊີງ ແລະ ຖາວອນ.

ຄ) ບັນດາກຳລັງປະກອບອາວຸດ ຂອງລາວທຸກຝ່າຍ ຢຸດເຊົາຢ່າງສົມບູນທຸກການເຄື່ອນໄຫວທາງທະຫານອັນເປັນການທະເລາະວິວາດຕໍ່ກັນ ຢູ່ເທິງໜ້າດິນ ແລະເທິງອາກາດ.

ມາດຕາ ໒- ຫລັງຈາກການຢຸດຍິງແລ້ວ:

ກ) ຫ້າມເດັດຂາດ ທຸກການເຄື່ອນໄຫວ ບຸກໂຈມຕີ,ບຽດຍຶດ, ກຳຣາບປາບຂູ່ແລະລ່ວງລ້ຳດ້ວຍທະຫານບົກ ຫລືທະຫານອາກາດ ເຂົ້າໃສ່ເຂດກວດກາຈົ່ວຄາວ ຂອງຝ່າຍກົງກັນຂ້າມ.

ຂ) ຫ້າມເດັດຂາດ ທຸກການກະທຳທາງທະຫານ ອັນເປັນການທະເລາະວິວາດອື່ນໆ ຕໍ່ກັນ, ໃນນັ້ນມີ ທັງບັນດາການເຄື່ອນໄຫວ, ກອງຫຸ້ມ ກອງປາບ ແລະການເຄື່ອນໄຫວປະກອບອາວຸດ ແລະສືບຂ່າວ ຢູ່ເທິງໜ້າດິນ ແລະເທິງອາກາດດ້ວຍ. ໃນກໍຣະນີທີ່ຝ່າຍໜຶ່ງຕ້ອງການຈະໄປລຳລຽງສະບຽງອາຫານ ໃຫ້ແກ່ຝ່າຍຕົນ ໂດຍຜ່ານເຂດຂອງຝ່າຍອື່ນນັ້ນ ໃຫ້ຄນະກັມມະການ ປະຕິບັດ ສັນຍາ ປຶກສາຕົກລົງ ວາງວິທີການ ໄວ້ໃຫ້ແກ່ກັນ ຢ່າງຄັກແນ່.

໓) ຫ້າມເດັດຂາດ ທຸກການເຄື່ອນທັບ ບັດກວາດ, ຂູ່ເຂັນ, ປາບປາມ, ແຕະຕ້ອງເຖິງຊີວິດ ແລະຊັບສິນຂອງປະຊາຊົນ ແລະທຸກການກະທຳ ອັນເປັນການແກ້ແຄ້ນ ແລະຈຳແນກການປະພຶດ ຕໍ່ຜູ້ທີ່ເຄີຍໄດ້ຮ່ວມມື ກັບຝ່າຍກົງກັນຂ້າມ ໃນປາງສົງຄາມ, ຊ່ວຍເຫລືອໃຫ້ປະຊາຊົນ ທີ່ຈຳເປັນຕ້ອງອົພຍົບຫນີ ຈາກບ້ານໃນຍາມສົງຄາມນັ້ນ ໃຫ້ມີອິດສະຣະ ກັບຄືນໄປບ້ານເກົ່າ, ທຳມາຫາກິນ ຕາມຄວາມປະສົງຂອງເຂົາເຈົ້າ.

໒) ຫ້າມບໍ່ໃຫ້ເອົາເຂົ້າລາວ : ພນັກງານທະຫານທຸກສນິດ, ກອງທະຫານຫລວງ ແລະ ກອງທະຫານທີ່ບໍ່ແມ່ນທະຫານຫລວງ ທຸກສນິດ ແລະ ອາວຸດຍຸດໂທປະກອນ ທຸກສນິດຂອງປະເທສນອກ, ເວັ້ນເສັຽແຕ່ ອັນທີ່ບົ່ງໄວ້ ໃນສັນຍາເຊີແນວ ປີ ໑໙໕໔ ແລະ ໑໙໖໒ ໃນກໍຣະນີທີ່ຈຳເປັນ ຕ້ອງປ່ຽນອາວຸດ ຍຸດໂທປະກອນ ທີ່ຖືກຊຳລຸດ ເປ່ເພໄປນັ້ນ ທັງສອງຝ່າຍຈະປຶກສາຫາລື ແລະ ຕົກລົງນຳກັນ.

<u>ມາດຕາ ໔-</u> ໃນກຳນົດເວລາຢ່າງຊ້າ ໖໐ (ຫົກສິບ) ມື້ ນັບແຕ່ມື້ ສ້າງຕັ້ງຣັຖບານປະສົມຊົ່ວຄາວແຫ່ງຊາດ ແລະ ຄນະມົນຕຣີປະສົມການເມືອງແຫ່ງຊາດແລ້ວ, ການຖອນພນັກງານທະຫານ, ກອງທະຫານຫລວງ ແລະກອງທະຫານທີ່ບໍ່ແມ່ນທະຫານຫລວງຂອງຕ່າງປະເທສອອກຈາກລາວ ແລະການຍຸບເລີກ ບັນດາການຈັດຕັ້ງ ທາງທະຫານ ແລະເຄື່ອງທະຫານຂອງຕ່າງປະເທສ ຕ້ອງໃຫ້ແລ້ວຢ່າງສົມບູນ.

ຕ້ອງຍຸບເລີກ " ກຳລັງພິເສດ " ອັນແມ່ນຕ່າງປະເທສ ເປັນຜູ້ຈັດຕັ້ງ, ປະກອບອາວຸດ, ໂອບຮົມ ແລະບັນຊາ ແລະ ຍຸບເລີກ ບັນດາຖານທັບ, ພື້ນຖານການທະຫານ, ຖານທີ່ຫມັ້ນ ຂອງກຳລັງອັນນີ້ ຢ່າງສິ້ນເຊີງ.

<u>ມາດຕາ ໔-</u> ລາວທັງສອງຝ່າຍ ຈະມອບສົ່ງ ຜູ້ຄົນທັງຫມົດບໍ່ວ່າສັນຊາດໃດ ທີ່ຖືກຈັບ ແລະກັກຂັງ ຍ້ອນວ່າ ໄດ້ຮ່ວມມືນຳຝ່າຍກົງກັນຂ້າມ ໃນປາງສົງຄາມໃຫ້ແກ່ກັນ.

ການມອບສົ່ງນັ້ນ ຈະດຳເນີນຕາມຣະບຽບການ ທີ່ສອງຝ່າຍໄດ້ຕົກລົງກັນ ແລະຢ່າງຊ້າທີ່ສຸດ ຕ້ອງໃຫ້ແລ້ວ ໃນກຳຫນົດເວລາ ໖໐ (ຫົກສິບ) ມື້ ຫລັງຈາກມື້ສ້າງຕັ້ງຣັຖບານປະສົມຊົ່ວຄາວແຫ່ງຊາດ ແລະ ຄນະມົນຕຣີປະສົມການເມືອງແຫ່ງຊາດແລ້ວ.

ຫລັງຈາກມອບສົ່ງ ພວກຄົນທີ່ຖືກຈັບໃຫ້ແກ່ກັນ ຄົບໝົດແລ້ວ, ແຕ່ລະຝ່າຍມີໜ້າທີ່ຊອກຫາຂ່າວຄາວ ກ່ຽວກັບພວກຄົນ ທີ່ສູນຫາຍໄປ ໃນຣະຫວ່າງສົງຄາມໃນລາວ ມາແຈ້ງໃຫ້ກັນຮູ້.

# ພາກ ໓

## ບັນດາຂໍ້ມາດຕາ ກ່ຽວກັບການເມືອງ

ມາດຕາ ໖- ດຳເນີນການເລືອກຕັ້ງທົ່ວໄປ ຕາມຫລັກເສຣີພາບແລະປະຊາທິປະໄຕ ຢ່າງແທ້ຈິງ ເພື່ອເລືອກຕັ້ງສະພາຜູ້ແທນຣາສດອນ ແລະສ້າງຕັ້ງຣັຖບານປະສົມແຫ່ງຊາດ ອັນສົມບູນ, ອັນເປັນຕົວແທນຢ່າງແທ້ຈິງ ຂອງປະຊາຊົນບັນດາຊົນຊາດ ໃນທົ່ວປະເທສລາວ ກ່ຽວກັບຣະບຽບການແລະເວລາດຳເນີນການເລືອກຕັ້ງທົ່ວໄປນັ້ນ ສອງຝ່າຍຈະຕົກລົງກັນ.

ໃນເວລາທີ່ຍັງບໍ່ທັນດຳເນີນການເລືອກຕັ້ງໄດ້ນັ້ນ, ທັງສອງຝ່າຍຕ້ອງສ້າງຕັ້ງຣັຖບານປະສົມຊົ່ວຄາວແຫ່ງຊາດຊຸດໃໝ່ ແລະຄະນະມົນຕີປະສົມການເມືອງແຫ່ງຊາດ ໃນກຳນົດເວລາຢ່າງຊ້າທີ່ສຸດ ໓໐ (ສາມສິບ) ມື້ ຫລັງຈາກມື້ເຊັນສັນຍາສບັບນີ້ເປັນຕົ້ນໄປ, ເພື່ອປະຕິບັດ ບັນດາສັນຍາທີ່ໄດ້ເຊັນກັນ, ແລະບໍຣິຫານວຽກງານຂອງປະເທສ.

ມາດຕາ ໗- ຣັຖບານປະສົມຊົ່ວຄາວແຫ່ງຊາດຊຸດໃໝ່ ປະກອບດ້ວຍຜູ້ແທນຝ່າຍຣັຖບານວຽງຈັນ ແລະຝ່າຍກຳລັງຮັກຊາດ ເປັນຈຳນວນເທົ່າກັນ ແລະບັນດາຜູ້ຊົງຄຸນອຸດທິ ທີ່ເຫັນພ້ອມນຳ ສັນຕິພາບ, ເອກະຣາຊ, ເປັນກາງ, ປະຊາທິປະໄຕ ເປັນຈຳນວນສອງຄົນຕາມທີ່ທັງສອງຝ່າຍຈະຕົກລົງກັນ; ຜູ້ຈະເປັນນາຍົກຣັຖມົນຕີໃຫ້ຢູ່ນອກຈຳນວນສອງຝ່າຍເທົ່າກັນນັ້ນ. ຣັຖບານປະສົມຊົ່ວຄາວແຫ່ງຊາດ ສ້າງຕັ້ງຂຶ້ນຕາມຣະບຽບການພິເສດ ໂດຍແມ່ນພຣະບາດສົມເດັດພຣະເຈົ້າມະຫາຊີວິດ ຊົງລົງພຣະປາຣະມາພິໄທ ຮັບຮອງ, ເຮັດວຽກຕາມຫລັກການ ເປັນເອກກະສັນຣະຫວ່າງສອງຝ່າຍ, ມີໜ້າທີ່ປະຕິບັດສັນຍາທີ່ໄດ້ເຊັນກັນແລະໂຄງການການເມືອງ, ທີ່ສອງຝ່າຍໄດ້ຕົກລົງກັນ, ເປັນຕົ້ນແມ່ນປະຕິບັດການຢຸດຍິງ,

ປົກປັກຮັກສາສັນຕິພາບໄວ້ຍາວນານ, ປະຕິບັດບັນດາສິດເສຣີພາບ ປະຊາທິປະໄຕ ຂອງປະຊາຊົນຢ່າງຄົບຖ້ວນ, ປະຕິບັດແນວທາງການຕ່າງປະເທດສັນຕິພາບ ເປັນເອກຣາຊ ແລະ ເປັນກາງ, ປະສານບັນດາແຜນການສ້າງສາເສຖກິດ, ຂຍາຍວັທນະທັມ, ຮັບແລະແຈກຢາຍສິ່ງຂອງ ຊ່ວຍເຫລືອຮ່ວມຂອງປະເທສຕ່າງໆ ທີ່ຊ່ວຍເຫລືອລາວ.

ມາດຕາ ໓- ຄນະມົນຕີປະສົມການເມືອງແຫ່ງຊາດ, ເປັນອົງການປອງດອງຊາດປະກອບດ້ວຍຜູ້ແທນຂອງຝ່າຍຣັຖບານວຽງຈັນ ແລະຂອງຝ່າຍບັນດາກຳລັງຮັກຊາດ, ເປັນຈຳນວນເທົ່າກັນ ແລະບັນດາຜູ້ຊົງຄຸນວຸດທິອື່ນໆ ທີ່ເຫັນພ້ອມນຳສັນຕິພາບ, ເອກະຣາຊ, ເປັນກາງ, ປະຊາທິປະໄຕ ຕາມຈຳນວນທີ່ທັງສອງຝ່າຍຈະຕົກລົງນຳກັນ, ເຮັດວຽກຕາມຫລັກການປຶກສາຫາລື ເປັນເອກະສັນຣະຫວ່າງສອງຝ່າຍ ແລະມີໜ້າທີ່ດັ່ງນີ້ :

— ປຶກສາຫາລື ແລະສົ່ງຄວາມເຫັນໃຫ້ຣັຖບານປະສົມຊົ່ວຄາວແຫ່ງຊາດກ່ຽວກັບບັນດາ ບັນຫາໃຫຍ່ທີ່ພົວພັນກັບແນວທາງພາຍໃນ ແລະຕ່າງປະເທດຂອງບ້ານເມືອງ.

— ຊຸກຍູ້ ແລະຊ່ວຍເຫລືອຣັຖບານປະສົມຊົ່ວຄາວແຫ່ງຊາດ ແລະຊຸກຍູ້ຊ່ວຍເຫລືອທັງສອງຝ່າຍ ໃຫ້ປະຕິບັດສັນຍາທີ່ໄດ້ເຊັນກັນ, ເຮັດໃຫ້ຄວາມຖືກຕ້ອງປອງດອງຊາດບັນລຸເຖິງຜົນສຳເຣັດ.

— ພ້ອມກັນກວດ ແລະຕົກລົງບັນດາກົດໝາຍ ແລະຣະບຽບການກ່ຽວກັບການເລືອກຕັ້ງແລະຮ່ວມມືກັບຣັຖບານປະສົມຊົ່ວຄາວແຫ່ງຊາດ ຈັດຕັ້ງການເລືອກຕັ້ງທົ່ວໄປເພື່ອເລືອກຕັ້ງເອົາສພາຜູ້ແທນຣາສດອນ ແລະສ້າງຕັ້ງຣັຖບານປະສົມແຫ່ງຊາດ ອັນສົມບູນ,

ວິທີການສ້າງຕັ້ງຄນະມົນຕີປະສົມການເມືອງແຫ່ງຊາດ ແມ່ນທັງສອງຝ່າຍປຶກສາຕົກລົງລະອຽດແລ້ວ ສົ່ງຂໍ້ຕົກລົງນັ້ນໃຫ້ຣັຖບານປະສົມຊົ່ວຄາວແຫ່ງຊາດ ນຳສົ່ງຂຶ້ນຖວາຍພຣະບາດສົມເດັດ ພຣະເຈົ້າມະຫາຊີວິດ ເພື່ອຊົງລົງພຣະປາຣະມາພິໄທ ແຕ່ງຕັ້ງການທີ່ຈະຍຸບເລີກ ຄນະມົນຕີປະສົມການເມືອງແຫ່ງຊາດ ຕ້ອງເຮັດໄປຕາມແບບດຽວກັນ ກັບວິທີການສ້າງຕັ້ງມັນດັ່ງກ່າວຂ້າງບົນນີ້.

ມາດຕາ ໔- ທັງສອງຝ່າຍຕົກລົງກັນເຮັດໃຫ້ນະຄອນຫລວງພຣະບາງ ແລະນະຄອນຫລວງວຽງຈັນເປັນກາງ ແລະຊອກທຸກວິທີການ ເພື່ອຮັບປະກັນຄວາມປອດໄພ ໃຫ້ຣັຖບານ

ປະສົມຊົ່ວຄາວແຫ່ງຊາດ ແລະຄນະມົນຕີປະສົມການເມືອງແຫ່ງຊາດ ເຄື່ອນໄຫວໄດ້ຢ່າງສັກສິດ. ຫລີກເວັ້ນທຸກການມ້າງເພ ຫລືຄວາມໜີບເຕັງ ຂອງທຸກກຳລັງທີ່ມາຈາກພາຍໃນ ຫລືພາຍນອກ.

ມາດຕາ ໑໐-

ກ) ໃນເວລາລໍຖ້າການເລືອກຕັ້ງ ສພາຜູ້ແທນຣາສດອນ ແລະສ້າງຕັ້ງຣັຖບານປະສົມແຫ່ງຊາດອັນສົມບູນນັ້ນ, ຕາມຈິດໃຈມາດຕາ ໖ ໃນພາກ ໒ ຂອງຖແລງການຮ່ວມເມືອງຊູຣິກວັນທີ ໒໒-໖-໑໙໖໑, ທັງສອງຝ່າຍຈະຮັກສາເຂດກວດກາ ຊົ່ວຄາວຂອງຕົນແລະພຍາຍາມປະຕິບັດໂຄງການການເມືອງ ຂອງຣັຖບານປະສົມຊົ່ວຄາວແຫ່ງຊາດທີ່ທັງສອງຝ່າຍໄດ້ເຫັນດີຕົກລົງນຳກັນ.

ຂ) ທັງສອງຝ່າຍຊຸກຍູ້ການປະຕິບັດ ການພົວພັນແບບປົກຕິຣະຫວ່າງສອງເຂດ, ສ້າງເງື່ອນໄຂອັນສດວກໃຫ້ແກ່ປະຊາຊົນ ໃນການໄປມາ, ທຳມາຫາກິນ, ຢ້ຽມຢາມຖາມຂ່າວກັນ, ແລກປ່ຽນທາງດ້ານເສຖກິດ, ວັດທະນະທັມ ແລະ ອື່ນໆ ແນ່ໃສ່ປັບປຸງຄວາມປອງດອງຊາດ ເພື່ອໃຫ້ການ ສ້າງເອກກະພາບ ຂອງບ້ານເມືອງ ສຳເຣັດໄດ້ໄວ.

ຄ) ທັງສອງຝ່າຍ ຈົດຈຳຮັບຮູ້ ເອົາການທີ່ ຣັຖບານອະເມຣິກາ ໄດ້ປະກາດວ່າຈະປະກອບສ່ວນ ເຂົ້າໃນການຮຳແຜສົງຄາມ ແລະໃນການສ້າງສາຂອງອິນດູຈີນ ພາຍຫລັງສົງຄາມ. ຣັຖບານປະສົມແຫ່ງຊາດ ຈະປຶກສາຫາລື ກັບຣັຖບານອາເມຣິກາ ກ່ຽວກັບການປະຕິບັດ ການປະກອບສ່ວນ ດັ່ງກ່າວນັ້ນ ກ່ຽວກັບປະເທດລາວ.

## ພາກ ໔

## ວ່າດ້ວຍຄນະກັມມະການ ປະສົມເພື່ອປະຕິບັດສັນຍາ ແລະຄນະກັມມະການສາກົນກວດກາ ແລະ ຄວບຄຸມ

ມາດຕາ ໑໑- ການປະຕິບັດສັນຍາສບັບນີ້ ຕົ້ນຕໍ ແມ່ນໜ້າທີ່ຮັບຜິດຊອບ ຂອງທັງສອງຝ່າຍທີ່ກ່ຽວຂ້ອງຢູ່ໃນລາວ.

ທັງສອງຝ່າຍ ຈັດຕັ້ງຄນະກັມມະການ ປະຕິບັດສັນຍາຂຶ້ນ ໃນທັນໃດ ໂດຍໃຫ້ປະ

ກອບດ້ວຍ ຈຳນວນຜູ້ແທນເທົ່າກັນ. ຄນະກັມມະການປະຕິບັດສັນຍາ ຈະປະຕິບັດໜ້າທີ່ໃນທັນທີ ເມື່ອການຢຸດຍິງມີຜົລສັກສິດ.

ຄນະກັມມະການປະຕິບັດສັນຍາ ເຮັດວຽກຕາມຫລັກການ ປຶກສາຫາລື ເປັນເອກກະສັນ.

<u>ມາດຕາ ໑໒-</u> ຄນະກັມມະການສາກົນກວດກາ ແລະ ຄວບຄູມ ທີ່ໄດ້ຖືກຈັດຕັ້ງຂຶ້ນ ຕາມສັນຍາເຈີເນວ ປີ ໑໙໕໔ ກ່ຽວກັບລາວ ປະກອບດ້ວຍຜູ້ແທນ ອິນເດັຽ ໂປໂລຍ ແລະ ການາດາ ໂດຍແມ່ນຜູ້ແທນ ອິນເດັຽ ເປັນປະທານ, ສືບຕໍ່ການເຄື່ອນໄຫວຖືກຕ້ອງຕາມໜ້າທີ່, ສິດອຳນາດ ແລະຫລັກການເຮັດວຽກ ດັ່ງທີ່ໄດ້ບົ່ງໄວ້ ໃນອະນຸສັນຍາ ຂອງສັນຍາເຈີແນວ ດັ່ງກ່າວຂ້າງເທິງນີ້.

# ພາກ ໕
# ບັນດາຂໍ້ມາດຕາອື່ນ

<u>ມາດຕາ ໑໓-</u> ຝ່າຍຣັຖບານວຽງຈັນ ແລະ ຝ່າຍບັນດາກຳລັງຮັກຊາດ ໃຫ້ຄຳໝັ້ນສັນຍາວ່າ ຈະປະຕິບັດສັນຍານີ້ ແລະ ຈະສືບຕໍ່ເຈຣະຈາກັນ ເພື່ອເຮັດໃຫ້ຂໍ້ມາດຕາທີ່ຕົກລົງກັນນັ້ນ ກາຍເປັນຕົວຈິງແລະ ແກ້ໄຂບັນດາບັນຫາທີ່ຄົງຄ້າງ ຊຶ່ງພົວພັນ ເຖິງສອງຝ່າຍດ້ວຍຈິດໃຈສເມີພາບ ແລະ ເຄົາຣົບ ຊຶ່ງກັນແລະກັນ ແນ່ໃສ່ຢຸດເຊົາສົງຄາມ, ຟື້ນຟູ ແລະ ປົກປັກຮັກສາ ສັນຕິພາບໃຫ້ໝັ້ນຄົງ ເທິງນານ, ປະຕິບັດຄວາມຖືກຕ້ອງປອງດອງຊາດ, ສ້າງເອກກະພາບຂອງບ້ານເມືອງ, ກ້າວຂຶ້ນສ້າງປະເທດລາວ ໃຫ້ເປັນປະເທດສັນຕິພາບ. ເອກະຣາຊ, ເປັນກາງ, ປະຊາທິປະໄຕ, ເອກະພາບ ແລະ ວັທນາຖາວອນ.

<u>ມາດຕາ ໑໔-</u> ສັນຍານີ້ ມີຜົລສັກສິດ ນັບຕັ້ງແຕ່ ມື້ເຊັນກັນເປັນຕົ້ນໄປ.

ເຮັດຢູ່ທີ່ ວຽງຈັນ, ວັນທີ ໒໑ (ຊາວເອັດ) ເດືອນ ກຸມພາ ປີ ໑໙໗໓, ເປັນພາສາລາວ ຈຳນວນ ໕ (ຫ້າ) ສບັບ : ສົ່ງຂຶ້ນຖວາຍ ພຣະບາດສົມເດັດ ພຣະເຈົ້າມະຫາຊີວິດ ໑ (ໜຶ່ງ) ສບັບ, ແຕ່ລະຝ່າຍ ຮັກສາໄວ້ ໑ (ໜຶ່ງ) ສບັບ ແລະ ເອົາມ້ຽນໄວ້ຕູ້ສມຸດ ຂອງຣັຖບານປະສົມຊົ່ວຄາວແຫ່ງຊາດ ແລະ ຄນະມົນຕີປະສົມການເມືອງແຫ່ງຊາດ ບ່ອນລະ ໑ (ໜຶ່ງ) ສບັບ.

ຜູ້ຕາງໜ້າຝ່າຍຣັຖບານ ວຽງຈັນ, ຜູ້ຕາງໜ້າຝ່າຍບັນດາກຳລັງຮັກຊາດ,

( ເຊັນ )

ພຍາ ເພັງ ພົງສວັນ ຜູ້ຕາງໜ້າ
ພິເສດທີ່ມີອຳນາດເຕັມ ຂອງ
ຣັຖບານ ວຽງຈັນ.

( ເຊັນ )

ພຍາ ພູມີ ວົງວິຈິດ ຜູ້ຕາງໜ້າພິເສດທີ່
ມີອຳນາດເຕັມ ຂອງບັນດາ ກຳລັງຮັກຊາດ

24/VII
ຫ້າມຈຳໜ່າຍ

# ອະນຸສັນຍາ ຂອງສັນຍາ
## ກ່ຽວກັບການຟື້ນຟູສັນຕິພາບ ແລະປະຕິບັດຄວາມ
## ຖືກຕ້ອງປອງດອງຊາດຢູ່ລາວ

# ອະນຸສັນຍາ

## ຂອງສັນຍາ ກ່ຽວກັບການຟື້ນຟູ ສັນຕິພາບ ແລະປະຕິບັດຄວາມຖືກຕ້ອງປອງດອງຊາດຢູ່ລາວ

ເພື່ອປະຕິບັດ ຕາມສັນຍາ ກ່ຽວກັບການຟື້ນຟູ ສັນຕິພາບ ແລະ ປະຕິບັດຄວາມຖືກຕ້ອງປອງດອງຊາດ, ຊຶ່ງທັງສອງຝ່າຍ ໄດ້ຕົກລົງ ແລະ ເຊັນກັນ ທີ່ວຽງຈັນ ວັນທີ່ ໒໑ (ຊາວເອັດ ) ກຸມພາ ໑໙໗໓, ຝ່າຍຣັຖບານ ວຽງຈັນ ແລະ ຝ່າຍບັນດາກຳລັງຮັກຊາດ ໄດ້ຕົກລົງກັນ ເປັນເອກສັນ ເຣັດອະນຸສັນຍາ ວາງວຽກງານປະຕິບັດ ລະອຽດດັ່ງຕໍ່ລົງໄປນີ້:

## ພາກ ໜຶ່ງ

## ວ່າດ້ວຍ ຣັຖບານປະສົມ ຊົ່ວຄາວແຫ່ງຊາດ

ມາດຕາ ໑-

ກ) ປະຕິບັດຕາມ ມາດຕາ ໖ ແລະ ໗ ຂອງສັນຍາ, ໃຫ້ຈັດຕັ້ງຣັຖບານປະສົມຊົ່ວຄາວແຫ່ງຊາດຂຶ້ນ ຊຶ່ງປະກອບດ້ວຍ ນາຍົກຣັຖມົນຕີ ທີ່ບໍ່ຢູ່ໃນຈຳນວນ ສອງຝ່າຍເທົ່າກັນ, ຮອງນາຍົກຣັຖມົນຕີ ສອງຄົນ ຜູ້ ໑ ສັງກັດຝ່າຍບັນດາກຳລັງຮັກຊາດ ວ່າການກະຊວງໜຶ່ງ, ຜູ້ ໑ ອີກສັງກັດ ຝ່າຍຣັຖບານ ວຽງຈັນ ວ່າການກະຊວງໜຶ່ງ. ບັນດາຣັຖມົນຕີ ວ່າການ ແລະ ຣັຖມົນຕີ ຊ່ວຍວ່າການ, ຮວມທັງໝົດ ໒໕ (ຊາວຫ້າ) ທ່ານ ແລະມີ ໑໒ (ສິບສອງ ) ກະຊວງດັ່ງລຸ່ມນີ້:

- ກະຊວງ ປ້ອງກັນປະເທດ ແລະ ນັກຣົບເກົ່າ.
- ກະຊວງ ການຕ່າງປະເທດ.
- ກະຊວງ ການຄັງ.
- ກະຊວງ ມະຫາດໄທ ແລະ ປະຊາສົງເຄາະ.

– ກະຊວງ ເສດຖະກິດ ແລະ ແຜນພັງ.

– ກະຊວງ ຖແລງຂ່າວ, ໂດສະນາການ ແລະ ທ່ອງທ່ຽວ.

– ກະຊວງ ສຶກສາທິການ, ສິລະປະກັມ ແລະ ກິລາ ຍຸວະຊົນ.

– ກະຊວງ ຍຸຕິທັມ.

– ກະຊວງ ທັມມະການ.

– ກະຊວງ ສາທາຣະນະສຸກ.

– ກະຊວງ ໂຍທາທິການ ແລະ ຂົນສົ່ງ.

– ກະຊວງ ໄປສະນີ ແລະ ໂທຣະຄົມມະນາຄົມ.

ຂ) ຢູ່ກະຊວງໃດ ໃຫ້ມີຣັຖມົນຕີ ວ່າການ ກະຊວງຜູ້ນຶ່ງ ແລະ ຣັຖມົນຕີ ຊ່ວຍວ່າການຜູ້ໜຶ່ງ ພ້ອມກັນຮັບຜິດຊອບວຽກງານ ທີ່ສັງກັດກະຊວງຂອງຕົນ.

ຄ) ກ່ຽວກັບອົງການ ຊ່ວຍວຽກນັ້ນ, ຣັຖບານປະສົມຊົ່ວຄາວແຫ່ງຊາດ ຈະໄດ້ ຈັດຕັ້ງສັບຊ້ອນ ໃຫ້ສອດຄ່ອງ ກັບສະພາບການ, ໜ້າທີ່ໃໝ່ ແລະ ຈິດໃຈ ຂອງສັນ ຍາ ທີ່ສອງຝ່າຍໄດ້ ເຊັນກັນ. ບົນຈິດໃຈປອງດອງຊາດ, ບັນດາຣັຖມົນຕີ ວ່າການ ແລະ ບັນດາຣັຖມົນຕີຊ່ວຍວ່າການ ເປັນຜູ້ຮັບຜິດຊອບ ຕໍ່ຣັຖບານປະສົມຊົ່ວຄາວ ແຫ່ງ ຊາດ ກ່ຽວກັບການສັບຊ້ອນ ປັບປຸງ ອົງການຊ່ວຍວຽກ ທີ່ສັງກັດ ກະຊວງຂອງຕົນໃຫ້ ສອດຄ່ອງ ກັບຄວາມຕ້ອງການ ຂອງວຽກງານ. ບັນດາຂ້າຣາຊການ ຂອງທັງສອງຝ່າຍ ລ້ວນແຕ່ໃຫ້ໄດ້ຮັບ ການສັບຊ້ອນ ແລະ ໃຊ້ວຽກຢ່າງເໝາະສົມຕາມຣະບຽບການ ທີ່ທັງ ສອງຝ່າຍ ຕົກລົງເຫັນດີນຳກັນ.

<u>ມາດຕາ ໒-</u>

ກ) ສມາຊິກຂອງຣັຖບານປະສົມຊົ່ວຄາວ ແຫ່ງຊາດ ປະກອບດ້ວຍ ຜູ້ຕາງໜ້າ ຂອງຝ່າຍຣັຖບານວຽງຈັນ, ຜູ້ຕາງໜ້າ ຂອງຝ່າຍບັນດາ ກຳລັງຮັກຊາດ ແລະ ບັນດາຜູ້ ຊົງຄຸນວຸດທິ ທີ່ເຫັນດີ ເຫັນພ້ອມ ນຳສັນຕິພາບ, ເອກຣາຊ, ຄວາມເປັນກາງ ແລະ ປະຊາທິປະໄຕ ທີ່ບໍ່ສັງກັດໃນສອງຝ່າຍ ດັ່ງກ່າວ ຂ້າງເທິງນີ້ ແລະ ໄດ້ຮັບການຕົກລົງເຫັນດີ ຂອງທັງສອງຝ່າຍ. ອັຕຣາສ່ວນແບ່ງປັນ ຄື ດັ່ງລຸ່ມນີ້:

<u>ຝ່າຍຣັຖບານວຽງຈັນ:</u>

ຮອງນາຍົກຣັຖມົນຕີ ນຶ່ງທ່ານ ແລະ ຣັຖມົນຕີ ສີ່ (໔) ທ່ານ ຮັບຜິດຊອບ ໔ ກະຊວງ ຄື: ກະຊວງສຶກສາທິການ, ສິລະປະກັມ ແລະ ກິລາຍຸວະຊົນ, ກະຊວງປ້ອງກັນປະເທດ ແລະ ນັກຮົບເກົ່າ, ກະຊວງມະຫາດໄທ ແລະ ປະຊາສົງເຄາະ, ກະຊວງການຄັງ ແລະ ກະຊວງສາທາຣະນະສຸກ ແລະ ຣັຖມົນຕີ ຊ່ວຍວ່າການ ຫົກ (໖) ທ່ານ, ຊຶ່ງ ໔ ທ່ານ ປະກອບເຂົ້າໃນ ໔ ກະຊວງ ທີ່ແມ່ນຄົນຂອງຝ່າຍ ບັນດາກຳລັງຮັກຊາດ ເປັນຣັຖມົນຕີ ວ່າການ ແລະ ໜຶ່ງ (໑) ທ່ານ ປະກອບເຂົ້າກະຊວງ ທີ່ແມ່ນຜູ້ຊົງ ຄຸນວຸດທິ ເປັນຣັຖມົນຕີ ວ່າການ.

**ຝ່າຍບັນດາ ກຳລັງຮັກຊາດ:**

ຮອງນາຍົກຣັຖມົນຕີ ໜຶ່ງ (໑) ທ່ານ ແລະ ຣັຖມົນຕີ ສີ່ (໔) ທ່ານ ຮັບຜິດຊອບຫ້າ (໕) ກະຊວງ ດັ່ງຕໍ່ໄປນີ້: ກະຊວງຕ່າງປະເທດ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງເສຖກິດ ແລະ ແຜນພັງ, ກະຊວງຖແລງຂ່າວ, ໂຄສະນາການ ແລະ ທ່ອງທ່ຽວ ແລະ ກະຊວງທັມມະການ, ແລະ ຣັຖມົນຕີຊ່ວຍວ່າການ ຫົກ (໖) ທ່ານ, ຊຶ່ງຫ້າ (໕) ທ່ານ ປະກອບເຂົ້າຢູ່ໃນ ຫ້າ (໕) ກະຊວງ ທີ່ແມ່ນຄົນຂອງຝ່າຍຣັຖບານວຽງຈັນ ເປັນຣັຖມົນຕີວ່າການ ແລະ ໜຶ່ງ (໑) ທ່ານ ປະກອບເຂົ້າກະຊວງ ທີ່ແມ່ນຜູ້ຊົງຄຸນວຸດທິ ເປັນຣັຖມົນຕີວ່າການ.

**ບັນດາຜູ້ຊົງຄຸນວຸດທິ ທີ່ເຫັນດີ ເຫັນພ້ອມ ບຳສັນຕິພາບ, ເອກຣາຊ, ຄວາມເປັນກາງ ແລະ ປະຊາທິປະໄຕ:**

ເປັນຣັຖມົນຕີວ່າການ ສອງ (໒) ທ່ານ ຮັບຜິດຊອບ ກະຊວງໄປສະນີ ແລະ ໂທຣະຄົມມະນາຄົມ ແລະ ກະຊວງ ຍຸຕິທັມ.

ຂ) ການແຈກຢາຍກະຊວງ ແລະ ລາຍຊື່ ຂອງບັນດາສມາຊິກ ຣັຖບານປະສົມຊົ່ວຄາວແຫ່ງຊາດ ມີຢູ່ໃນບັນຊີຕ່າງຫາກ.

**ມາດຕາ ປ-**

ອີງຕາມຂໍ້ບັນຍັດ ທີ່ໄດ້ຣະບຸໄວ້ ໃນມາດຕາ ໗ ແລະ ມາດຕາ ໘ ຂອງສັນຍາ, ຣັຖບານປະສົມຊົ່ວຄາວ ແຫ່ງຊາດ ຈະວາງໂຄງການການເມືອງ ບົນພື້ນຖານ ສັນຍາເຈນີວ ປີ ໑໙໖໒ ແລະ ຕາມຂໍ້ສເນີແນະ ຂອງ ຄນະມົນຕີປະສົມການເມືອງ ແຫ່ງຊາດ,

ແນໃສ່ປົກປັກຮັກສາ ສັນຕິພາບໄວ້ຢ່າງເຫິງນານ ແລະ ຕລອດການ, ປະຕິບັດ ບັນດາສິດເສຣີພາບ ປະຊາທິປະໄຕ ຂອງປະຊາຊົນ ຢ່າງຄົບຖ້ວນ, ປະຕິບັດແນວທາງການຕ່າງປະເທດ ທີ່ເປັນເອກຣາຊ ແລະ ເປັນກາງ, ປະຕິບັດຄວາມຖືກຕ້ອງປອງດອງ ແລະ ເອກພາບ ຂອງຊາດ, ກໍ່ສ້າງປະເທດລາວ ໃຫ້ເປັນປະເທດສັນຕິພາບ, ເອກຣາຊ, ເປັນກາງ, ປະຊາທິປະໄຕ, ເອກພາບ ແລະ ວັທນາຖາວອນ.

ມາດຕາ ໔-

ກ) ຣັຖບານປະສົມຊົ່ວຄາວ ແຫ່ງຊາດ ເຮັດວຽກຕາມຫລັກການ ເປັນເອກະສັນຣະຫວ່າງສອງຝ່າຍ ກ່ຽວກັບທຸກວຽກງານສຳຄັນ ຂອງຊາດ. ທຸກບັນຫາໃຫຍ່ ທີ່ມີການພົວພັນເຖິງແນວທາງ, ແຜນນະໂຍບາຍ ແລະ ນະໂຍບາຍພາຍໃນ ແລະ ຕ່າງປະເທດ ຂອງຣັຖບານປະສົມຊົ່ວຄາວ ແຫ່ງຊາດ ຈະຕ້ອງໄດ້ປຶກສາຫາລືເປັນເອກະສັນນຳກັນ ຢູ່ໃນກອງປະຊຸມ ຄນະຣັຖບານເສັຽກ່ອນ.

ທຸກການເຄື່ອນໄຫວ ຂອງ ບັນດາຣັຖມົນຕີວ່າການ ແລະ ຣັຖມົນຕີຊ່ວຍວ່າການ ໃນຣັຖບານປະສົມຊົ່ວຄາວ ແຫ່ງຊາດ ລ້ວນແຕ່ຕ້ອງອີງໃສ່ໂຄງການ ການເມືອງຂອງຣັຖບານປະສົມຊົ່ວຄາວແຫ່ງຊາດ ແລະບັນດາມະຕິ ຂອງກອງປະຊຸມຄນະຣັຖບານ.

ຂ) ເນື່ອງຈາກ ລັກສະນະປະສົມ ຂອງຣັຖບານປະສົມຊົ່ວຄາວ ແຫ່ງຊາດ, ຣະຫວ່າງນາຍົກຣັຖມົນຕີ ແລະ ຮອງນາຍົກຣັຖມົນຕີ ຫລື. ຣະຫວ່າງ ຣັຖມົນຕີວ່າການແລະ ຣັຖມົນຕີຊ່ວຍວ່າການ ຢູ່ໃນແຕ່ລະກະຊວງ ຕ້ອງປຶກສາຫາລື ຈົນເຫັນດີເຫັນພ້ອມນຳກັນ ໃນການປະຕິບັດ ບັນດານະໂຍບາຍ ແລະແຜນນະໂຍບາຍ ຂອງ ຣັຖບານ.

ຄ) ຝ່າຍໃດ ກຳກັບວຽກງານ ຂອງກະຊວງໃດ, ຝ່າຍນັ້ນ ເປັນຜູ້ຮັບຜິດຊອບກະຊວງນັ້ນ. ໃນກໍຣະນີ ທີ່ສມາຊິກ ຂອງ ຣັຖບານປະສົມຊົ່ວຄາວ ແຫ່ງຊາດ ຂອງຝ່າຍໃດ ບໍ່ຢູ່ຊົ່ວຄາວ, ຝ່າຍນັ້ນ ສເນີແຕ່ງຕັ້ງ ສມາຊິກ ຂອງຝ່າຍຕົນ ໃນຄນະຣັຖບານເຂົ້າວ່າການແທນຊົ່ວຄາວ. ຖ້າຕຳແຫນ່ງສມາຊິກຝ່າຍໃດ ໃນຣັຖບານ ຫາກວ່າງລົງ ດ້ວຍເຫດການຕ່າງ ໆ ໃຫ້ຝ່າຍນັ້ນ ສເນີແຕ່ງຕັ້ງ ຄົນຂອງຝ່າຍຕົນ ເຂົ້າແທນ. ກ່ຽວກັບສມາຊິກ ທີ່ເປັນຜູ້ຊົງຄຸນວຸດທິນັ້ນ ແມ່ນທັງສອງຝ່າຍ ພ້ອມກັນຕົກລົງ ສເນີແຕ່ງຕັ້ງ ສມາຊິກຣັຖບານເປັນຜູ້ວ່າການແທນ. ການແຕ່ງຕັ້ງຄົນ ເຂົ້າວ່າການແທນນັ້ນ ຕ້ອງໄດ້ຮັບຄວາມເຫັນດີເຫັນພ້ອມ ຈາກ ກອງປະຊຸມ ຄນະຣັຖບານ.

# ພາກສອງ

# ວ່າດ້ວຍ ຄນະມົນຕີ ປະສົມການເມືອງ ແຫ່ງຊາດ

ມາດຕາ ໕-

ປະຕິບັດຕາມ ມາດຕາ ໖ ແລະ ໗ ຂອງສັນຍາ, ໃຫ້ຈັດຕັ້ງຄນະມົນຕີ ປະສົມການເມືອງ ແຫ່ງຊາດ ແລະ ວິງການຊ່ວຍວຽກ ຂອງ ຄນະມົນຕີ ປະສົມການເມືອງ ແຫ່ງຊາດຂຶ້ນຕາມຫລັກການ ດັ່ງຕໍ່ໄປນີ້:

ກ) ຄນະມົນຕີປະສົມການເມືອງ ແຫ່ງຊາດ ປະກອບດ້ວຍ ປະທານ, ຮອງປະທານ ສອງ ທ່ານ, ບັນດາກັມມະການປະຈຳ ແລະ ບັນດາກັມມະການສາມັນ ຮວມທັງໝົດເປັນຈຳນວນສີ່ສິບສອງ (໔໘) ທ່ານ, ປະກອບດ້ວຍຜູ້ແທນຂອງທັງສອງຝ່າຍ ແລະ ບັນດາຜູ້ຊົງຄຸນວຸດທິ ທີ່ເຫັນດີເຫັນພ້ອມນຳ ສັນຕິພາບ, ເອກຣາຊ, ຄວາມເປັນກາງ ແລະ ປະຊາທິປະໄຕ ຊຶ່ງແມ່ນສອງຝ່າຍ ເປັນຜູ້ຕົກລົງເຫັນດີນຳກັນ, ໂດຍແບ່ງອອກ ດັ່ງນີ້ :

- ຝ່າຍຣັຖບານ ວຽງຈັນ ໑໖ (ສິບຫົກ) ທ່ານ
- ຝ່າຍບັນດາກຳລັງຮັກຊາດ ໑໖ (ສິບຫົກ) ທ່ານ
- ບັນດາຜູ້ຊົງຄຸນວຸດທິ ໂດຍແມ່ນສອງຝ່າຍ ຕົກລົງເຫັນດີນຳກັນ ໑໐ (ສິບ) ທ່ານ.

ຂ) ຣະຫວ່າງສອງສໄມປະຊຸມ ຂອງຄນະມົນຕີ ແມ່ນຄນະປະຈຳ ເປັນຜູ້ບໍຣິຫານວຽກງານປະຈຳວັນ. ຄນະປະຈຳ ປະກອບດ້ວຍ (໑໐) ທ່ານ ໂດຍແມ່ນສອງຝ່າຍ ເປັນຜູ້ສເນີ ດ້ວຍຈຳນວນເທົ່າກັນ, ຮວມມີ : ປະທານຄນະມົນຕີ ໑ ທ່ານ ສັງກັດ ຝ່າຍບັນດາກຳລັງຮັກຊາດ, ຮອງປະທານຄນະມົນຕີ ໘ ທ່ານ ໃນນັ້ນ ຮອງປະທານຜູ້ໜຶ່ງ ເປັນທັງເລຂາທິການໃຫຍ່ ສັງກັດຝ່າຍບັນດາກຳລັງຮັກຊາດ ແລະ ຮອງປະທານອີກຜູ້ໜຶ່ງ ສັງ

ກັດຝ່າຍຣັຖບານ ວຽງຈັນ ແລະ ກັມມະການປະຈຳ ຂອງ ຄນະມົນຕີ ໆ ທ່ານ ໃນ ນັ້ນ ໓ ທ່ານ ສັງກັດຝ່າຍບັນດາກຳລັງຮັກຊາດ ແລະ ໔ ທ່ານ ສັງກັດຝ່າຍຣັຖບານ ວຽງຈັນ.

ຄ) ຄນະມົນຕີ ປະສົມການເມືອງ ແຫ່ງຊາດ ປະກອບດ້ວຍ ໖ ກັມມາທິການ ດັ່ງ ລຸ່ມນີ້:

— ກັມມາທິການ ເລຂານຸການ ເຮັດໜ້າທີ່ຊ່ວຍປະທານ ອຳນວຍທຸກວຽກງານ ຂອງຄນະມົນຕີ, ກຳກັບການຕົ້ນຄ້ວາ, ຮວບຮວມ ສະເໜີນະໂຍບາຍ, ວາງແຜນການດຳເນີນງານ ແລະ ອຳນວຍການປະສົມປະສານວຽກງານ ຣະຫວ່າງບັນດາກັມມາທິການ.

— ກັມມາທິການ ການເມືອງ, ກົດໝາຍ ແລະ ການເລືອກຕັ້ງຕໍ່ໄປ.

— ກັມມາທິການ ຮັກສາຄວາມສງົບ ແລະ ປ້ອງກັນປະເທດ.

— ກັມມາທິການ ກິຈການຕ່າງປະເທດ ແລະ ການຊ່ວຍເຫລືອ ຂອງຕ່າງປະເທດ.

— ກັມມາທິການ ເສຖກິດ ແລະ ການຄັງ.

— ກັມມາທິການ ສຶກສາ ແລະ ວັທນະທັມ.

ນອກຈາກນັ້ນ, ຄນະມົນຕີ ຍັງມີຫ້ອງວ່າການ ທີ່ກຳກັບວຽກງານ ບໍຣິຫານ.

ຍົກເວັ້ນໃຫ້ແຕ່ປະທານ ຄນະມົນຕີ ເທົ່ານັ້ນ, ບັນດາສມາຊິກອື່ນ ຂອງຄນະມົນຕີ ຕ້ອງແບ່ງປັນກັນ ເຂົ້າເຮັດວຽກງານ ຢູ່ໃນກັມມາທິການຕ່າງ ໆ.

ງ) ລາຍຊື່ສມາຊິກ ຄນະມົນຕີ ຈະໄດ້ຈັດລົງ ໃນບານຊີ ຕ່າງຫາກ

ມາດຕາ ໖.-

ຫລັກການ ແລະ ຣະບຽບວິທີເຮັດວຽກ ຂອງ ຄນະມົນຕີປະສົມການເມືອງ ແຫ່ງຊາດ:

ກ) ໜ້າທີ່ຮັບຜິດຊອບ ຂອງປະທານ, ບັນດາຮອງປະທານ, ເລຂາທິການໃຫຍ່, ບັນດາກັມມະການປະຈຳ ພ້ອມທັງກົດຣະບຽບ ເງື່ອນໄຂ ຂອງຄນະມົນຕີ ແລະ ຂອງຄນະປະຈຳ ຄນະມົນຕີ ຫລື ຂອງບັນດາ ກັມມາທິການ ແລະ ຫ້ອງວ່າການ ທີ່ຂຶ້ນກັບຄນະມົນຕີ ຈະແມ່ນຄນະປະຈຳຄນະມົນຕີ ເປັນຜູ້ເຮັດຮ່າງອອກ ແລ້ວນຳສເນີ ຂໍຄວາມອະນຸມັດ ຂອງຄນະມົນຕີ.

ຂ) ຄນະມົນຕີ ປະສົມການເມືອງ ແຕ່ງຊາດ ເຮັດວຽກຕາມຫລັກການ ສເມີພາບ ເຈຣະຈາ ປຶກສາຫາລືກັນ ຈົນໃຫ້ກ້າວໄປເຖິງ ຂັ້ນເຫັນດີ ເຫັນພ້ອມນຳກັນ. ຖ້າຫາກບໍ່ສາມາດ ເປັນເອກະສັນກັນທັງຫມົດ ໃນຄນະມົນຕີນັ້ນ, ຄວາມເຫັນພ້ອມເປັນເອກະສັນ ຣະຫວ່າງ ໒ ຝ່າຍ ຄື ຝ່າຍຣັຖບານ ວຽງຈັນ ແລະ ຝ່າຍບັນດາກຳລັງຮັກຊາດ ກໍ່ເປັນອັນຕັດສິນໄດ້. ສ່ວນຄນະປະຈຳ ຂອງຄນະມົນຕີ ແມ່ນເຮັດວຽກຕາມຫລັກການ ເປັນເອກະສັນກັນ ຣະຫວ່າງສອງຝ່າຍ.

ຄ) ຝີ ເດືອນໃດ, ຄນະມົນຕີ ປະຊຸມກັນເທື່ອຫນຶ່ງ. ການປະຊຸມແຕ່ລະສໄມ ບໍ່ໃຫ້ກາຍ ໑ ເດືອນ. ໃນກໍຣະນີທີ່ຈຳເປັນ ຈະຕ້ອງໄຂກອງປະຊຸມ ວິສາມັນນັ້ນ ຄນະປະຈຳ ຂອງຄນະມົນຕີ ຈະເປັນຜູ້ຕົກລົງ ແລະ ຮຽກໂຮມປະຊຸມ.

ງ) ບັນດາສມາຊິກ ຂອງຄນະມົນຕີ ມີຫນ້າທີ່ ໄປພົບປະຢ້ຽມຢາມ ປະຊາຊົນພົລເມືອງທົ່ວປະເທດ ເພື່ອເກັບກຳເອົາ ຄວາມມຸ້ງມາດປາຖນາ ແລະ ຄວາມຄິດຄວາມເຫັນຂອງເຂົາເຈົ້າຂຶ້ນມາລາຍງານ ຕໍ່ຄນະມົນຕີ.

ຈ) ໃນກໍຣະນີ ທີ່ສມາຊິກ ຄນະກັມມະການ ຂອງຄນະມົນຕີປະສົມການເມືອງ ແຕ່ງຊາດ ຂອງຝ່າຍໃດ ບໍ່ຢູ່ຊົ່ວຄາວ ຫລືຕິດຂັດບໍ່ມາຮ່ວມປະຊຸມໄດ້ ໃຫ້ຝ່າຍນັ້ນ ແຕ່ງຕັ້ງ ສມາຊິກຂອງຝ່າຍຕົນ ເຂົ້າວ່າການແທນ ຊົ່ວຄາວ ຖ້າວ່າຕຳແຫນ່ງສມາຊິກ ຂອງຝ່າຍໃດ ຫາກວ່າງລົງ ດ້ວຍເຫດການຕ່າງໆ ໃຫ້ຝ່າຍນັ້ນ ສເນີແຕ່ງຕັ້ງ ຄົນຂອງຝ່າຍຕົນ ເຂົ້າແທນ. ກ່ຽວກັບສມາຊິກ ທີ່ເປັນຜູ້ຊົງຄຸນ ວຸດທິ ແມ່ນສອງຝ່າຍຕົກລົງນຳກັນ.

ມາດຕາ ໗.-

ການພົວພັນຣະຫວ່າງ ຄນະມົນຕີ ປະສົມການເມືອງ ແຕ່ງຊາດ ກັບຣັຖບານປະສົມຊົ່ວຄາວແຕ່ງຊາດ :

ກ) ຄນະມົນຕີ ປະສົມການເມືອງ ແຕ່ງຊາດ ແລະ ຣັຖບານປະສົມຊົ່ວຄາວ ແຕ່ງຊາດ ລ້ວນແຕ່ແມ່ນສ້າງຕັ້ງຂຶ້ນ ດ້ວຍຄວາມເຫັນດີ ເຫັນພ້ອມ ຂອງຝ່າຍ ຣັຖບານ ວຽງຈັນ ແລະ ຂອງຝ່າຍ ບັນດາກຳລັງຮັກຊາດ ແລະ ດ້ວຍການ ຊົງລົງພຣະປາຣະມາພິໄທ ແຕ່ງຕັ້ງ ຂອງ ພຣະບາດສົມເດັດ ພຣະເຈົ້າມະຫາຊີວິດ ຕາມທີ່ໄດ້ບັນຍັດໄວ້ ໃນມາດຕາ ໗ ແລະ ໘

ຂອງສັນຍາ ຟື້ນຟູສັນຕິພາບ ແລະ ປະຕິບັດ ຄວາມຖືກຕ້ອງປອງດອງຊາດ. ຄນະມົນຕີ ປະສົມການເມືອງ ແຫ່ງຊາດ ແລະ ຣັຖບານປະສົມຊົ່ວຄາວແຫ່ງຊາດ ແມ່ນສອງອົງການ ເອກະຣາຊ ແລະ ສເມີພາບກັນ, ປະສົມປະສານກັນ ຢ່າງແໜ້ນແຟ້ນ ແລະ ເປັນປົກະຕິ ເພື່ອເອົາໃຈໃສ່ກິຈະການ ຂອງບ້ານເມືອງ ພາຍໃຕ້ພຣະຣາຊອຸປະຖັມ ຂອງພຣະບາດສົມເດັດ ພຣະເຈົ້າມະຫາຊີວິດ.

ຄນະມົນຕີ ປະສົມການເມືອງ ແຫ່ງຊາດ ແລະ ຣັຖບານປະສົມຊົ່ວຄາວແຫ່ງຊາດ ຕ້ອງແຈ້ງຂ່າວ ສພາບການວຽກງານ ໃຫ້ແກ່ກັນ ຢ່າງເປັນປົກະຕິ ແລະ ຊ່ວຍເຫລືອກັນ ແກ້ໄຂບັນດາ ບັນຫາວຽກງານ ຂອງບ້ານເມືອງ.

ຂ) ຕາມມາດຕາ ໙ ຂອງສັນຍາ, ຄນະມົນຕີ ປະສົມການເມືອງແຫ່ງຊາດ ມີໜ້າທີ່ປຶກສາຫາລື ແລະ ສົ່ງຄວາມເຫັນ ໃຫ້ຣັຖບານປະສົມຊົ່ວຄາວແຫ່ງຊາດ ກ່ຽວກັບບັນດາ ບັນຫາໃຫຍ່ທີ່ພົວພັນກັບແນວທາງ ນະໂຍບາຍພາຍໃນ ແລະ ຕ່າງປະເທດຂອງບ້ານເມືອງ, ຊຸກຍູ້ ແລະ ຊ່ວຍເຫລືອ ຣັຖບານປະສົມຊົ່ວຄາວ ແຫ່ງຊາດ ແລະ ຊຸກຍູ້ ຊ່ວຍເຫລືອທັງ ສອງຝ່າຍ ໃຫ້ປະຕິບັດສັນຍາ ທີ່ໄດ້ເຊັນກັນ ເຮັດໃຫ້ຄວາມຖືກຕ້ອງປອງດອງຊາດ ບັນລຸເຖິງຜົນສຳເຣັດ, ພ້ອມກັນກອດກາ ແລະ ຕົກລົງ ຫລືສເນີແກ້ໄຂ ບັນດາກົດໝາຍ ແລະ ຣະບຽບການ ກ່ຽວກັບການເລືອກຕັ້ງ, ຮ່ວມມືກັບ ຣັຖບານປະສົມຊົ່ວຄາວແຫ່ງຊາດ ຈັດຕັ້ງການເລືອກຕັ້ງ ເອົາສະພາຜູ້ແທນຣາສດອນ ແລະ ສ້າງຕັ້ງ ຣັຖບານປະສົມແຫ່ງຊາດ ອັນສົມບູນ ໃນເວລາອັນໄວ ເທົ່າທີ່ຈະເຮັດໄດ້.

ຣັຖບານປະສົມຊົ່ວຄາວແຫ່ງຊາດ ພິຈາຣະນາ ແລະ ປະຕິບັດບັນດາ ຂໍ້ສເນີແນະ ຂອງ ຄນະມົນຕີ ປະສົມການເມືອງແຫ່ງຊາດ ຢ່າງເຂັ້ມງວດ. ໃນກໍຣະນີ ທີ່ຣັຖບານປະສົມຊົ່ວຄາວ ແຫ່ງຊາດ ບໍ່ເຫັນດີນຳຂໍ້ສເນີແນະດ້ວຍເຫດຜົນອັນໃດອັນໜຶ່ງນັ້ນ, ຣັຖບານປະສົມຊົ່ວຄາວ ແຫ່ງຊາດ ກໍຕ້ອງແຈ້ງ ໃຫ້ຄນະມົນຕີ ປະສົມການເມືອງ ແຫ່ງຊາດ ຊາບ ໂດຍໃຫ້ມີການອະທິບາຍ ອັນຈະແຈ້ງ ພຽງພໍເໝາະສົມ.

ຄ) ກ່ຽວກັບວຽກງານຕ່າງໆ ຂອງຊາດ ທີ່ພົວພັນເຖິງແນວທາງ ນະໂຍບາຍພາຍໃນ ແລະ ຕ່າງປະເທດ ຂອງຣັຖນັ້ນ, ຕ້ອງມີການປຶກສາ ພິຈາຣະນາ ເຫັນດີ ເຫັນພ້ອມ

ເປັນເອກະສັນກັນ ຣະຫວ່າງຄນະມົນຕີ ປະສົມການເມືອງ ແຫ່ງຊາດ ຫລື ຄນະປະຈຳຂອງຄນະມົນຕີ ກັບຣັຖບານປະສົມຊົ່ວຄາວ ແຫ່ງຊາດ. ຖ້າຫາກຕ້ອງການ ກໍອາດຈະມີການປະຊຸມ ປະສົມຣະຫວ່າງຄນະປະຈຳ ຄນະມົນຕີ ກັບ ຣັຖບານປະສົມຊົ່ວຄາວແຫ່ງຊາດ.

ງ) ຄນະມົນຕີ ປະສົມການເມືອງ ແຫ່ງຊາດ ມີງົບປະມານ ສະເພາະຂອງຕົນ ສຳຣັບການໃຊ້ຈ່າຍຕ່າງ ໆ ໂດຍແມ່ນຣັຖບານ ປະສົມຊົ່ວຄາວແຫ່ງຊາດ ເອົາຮ່ວມເຂົ້າໃນງົບປະມານ ຂອງຊາດ ແລະ ຄັງຫລວງເປັນຜູ້ຈ່າຍເງິນໃຫ້.

ມາດຕາ ໘-

ບັນດາສມາຊິກ ຂອງຄນະມົນຕີ ປະສົມການເມືອງແຫ່ງຊາດ ໄດ້ຮັບອະພິສິດທີ່ເຄີຍໃຫ້ແກ່ ສມາຊິກຣັຖສະພາ ຕາມທັມມະດາມາແລ້ວ.

## ພາກສາມ

## ວ່າດ້ວຍການປະຕິບັດ ບັນດາສິດເສຣີພາບ ປະຊາທິປະໄຕ ຂອງປະຊາຊົນ.

ມາດຕາ ໙-

ເພື່ອປະຕິບັດຕາມ ມາດຕາ ໑, ໒ (ງ) ຂອງສັນຍາ ວ່າດ້ວຍການປະຕິບັດ ບັນດາສິດເສຣີພາບ ປະຊາທິປະໄຕ ຂອງປະຊາຊົນ ຢ່າງສຸດຂີດນັ້ນ, ທັງສອງຝ່າຍ ໃຫ້ຄຳໝັ້ນສັນຍາ ວ່າ:

ກ) ມອບສິດໃຫ້ຣັຖບານ ປະສົມຊົ່ວຄາວ ແຫ່ງຊາດ ລຶບລ້າງ ຫລື ດັດແປງແກ້ໄຂ ທຸກຣະບຽບກົດໝາຍ, ທຸກຂໍ້ກຳນົດ ແລະ ທຸກການຈັດຕັ້ງ ອັນຝືນຕໍ່ສິດເສຣີພາບ ປະຊາທິປະໄຕ ຂອງປະຊາຊົນ ທີ່ໄດ້ຣະບຸໄວ້ ຢູ່ໃນມາດຕາ ໑, ໒ (ງ) ຂອງສັນຍາ.

ຂ) ມອບໜ້າທີ່ຮັບຜິດຊອບ ໃຫ້ຄນະມົນຕີ ປະສົມການເມືອງແຫ່ງຊາດ ແລະ

ຣັຖບານປະສົມຊົ່ວຄາວແຫ່ງຊາດ ໃນການກວດກາ ດັດແປງ ແລະ ແກ້ໄຂເພີ້ມເຕີມ ກົດໝາຍ ວ່າດ້ວຍສິດເສຣີພາບ ປະຊາທິປະໄຕ ຂອງປະຊາຊົນ ສບັບປີ ໑໙໕໗ ເພື່ອ ໃຫ້ສອດຄ່ອງ ກັບສະພາບການ ຂອງປະເທດ ໃນປັດຈຸບັນ.

ຫລັງຈາກ ຄນະມົນຕີ ປະສົມການເມືອງ ແຫ່ງຊາດ ແລະ ຣັຖບານປະສົມຊົ່ວ ຄາວ ແຫ່ງຊາດ ໄດ້ກວດກາດັດແປງ ແລະ ແກ້ໄຂເພີ້ມເຕີມ ແລະ ພຣະບາດສົມເດັດ ພຣະເຈົ້າມະຫາຊີວິດ ໄດ້ຊົງມີພຣະຣາຊໂອງການ ອະນຸມັດໄຊ້ແລ້ວ, ຣັຖບານປະສົມຊົ່ວ ຄາວ ແຫ່ງຊາດ ມີໜ້າທີ່ປະກາດໄຊ້ກົດໝາຍ ວ່າດ້ວຍ ສິດເສຣີພາບ ປະຊາທິປະໄຕ ຂອງ ປະຊາຊົນນັ້ນ ໂດຍທັນທີ ເພື່ອ ໃຫ້ພົລເມືອງລາວ ໄດ້ຮູ້ທົ່ວເຖິງກັນ ແລະ ພ້ອມ ກັນ ປະຕິບັດ.

ຣັຖບານປະສົມຊົ່ວຄາວແຫ່ງຊາດ ແລະ ຄນະມົນຕີ ປະສົມການເມືອງແຫ່ງຊາດ ຕ້ອງພ້ອມກັນ ດຳເນີນການເລືອກຕັ້ງ ແບບ ປະຊາທິປະໄຕ ເພື່ອປັບປຸງ ບັນດາ ອົງການ ປົກຄອງ ຂອງ ຣັຖ ຂັ້ນ ຕ່າງ ໆ ໃຫ້ ເຂັ້ມແຂງ ແລະ ຄົບຖ້ວນ, ກຽມທຸກເງື່ອນໄຂ ເພື່ອ ອຳນວຍ ໃຫ້ ການເລືອກຕັ້ງ ທົ່ວໄປ ໄດ້ ດຳເນີນໄປ ຢ່າງເສຣີ ແລະ ມີ ປະຊາທິ ປະໄຕ ຢ່າງແທ້ຈິງ, ເພື່ອ ເລືອກຕັ້ງ ຣັຖສະພາ ຖາວອນ, ປະຕິບັດ ຄວາມຖືກຕ້ອງ ປອງດອງຊາດ ແລະ ເຮັດໃຫ້ ປະເທດຊາດ ເປັນເອກະພາບ.

ຄ) ສະເພາະໜ້ານີ້, ຕ້ອງສົ່ງເສີມ ແລະ ຮັບປະກັນ ໃຫ້ ພົລເມືອງລາວທຸກ ຄົນ ມີສິດເສຣີພາບ ໃນການອອກ ຄວາມຄິດ ຄວາມເຫັນ ຂອງຕົນ ກ່ຽວກັບ ວຽກ ບ້ານ ການເມືອງ ຂອງຊາດ, ຊຶ່ງ ສອດຄ່ອງ ກັບ ແນວທາງ ສັນຕິພາບ, ເອກະຣາຊ, ເປັນກາງ, ປະຊາທິປະໄຕ ແລະ ຄວາມຖືກຕ້ອງປອງດອງຊາດ ຂອງ ພຣະຣາຊອານາຈັກ. ແລະ ມີ ສິດເສຣີພາບ ປະຊາທິປະໄຕ ທີ່ໄດ້ ຣະບຸໄວ້ ຢູ່ໃນ ມາດຕາ ໑ ຂ້ (ງ) ຂອງ ສັນຍາ; ສົ່ງເສີມ ແລະ ຮັບປະກັນ ສິດສເມີພາບ ຣະຫວ່າງ ຊົນຊາດຕ່າງ ໆ ແລະ ສິດສເມີພາບ ຣະຫວ່າງ ຍິງຊາຍ. ຣັຖບານປະສົມຊົ່ວຄາວແຫ່ງຊາດ ແລະ ຄນະ ມົນຕີ ປະສົມການເມືອງແຫ່ງຊາດ ຕ້ອງ ມີວິທີການ ລະອຽດ ເພື່ອຊ່ວຍເຫລືອ ປະ ຊາຊົນ ທີ່ ຈຳເປັນ ຕ້ອງ ອົພຍົບ ໃນປາງສົງຄາມນັ້ນ ໃຫ້ໄດ້ຢູ່ ຫລື ກັບຄືນ ບ້ານ ເມືອງ

ເກົ່າຕາມຄວາມປະສົງ ຂອງ ເຂົາເຈົ້າເພື່ອທຳມາຫາກິນ ແລະ ເຮັດໃຫ້ ຊີວິດ ການເປັນຢູ່ ຂອງ ເຂົາເຈົ້າ ເປັນ ປົກະຕິ ໂດຍໄວ.

ງ) ຫ້າມເດັດຂາດ ບໍ່ໃຫ້ບຸກຄົນໃດ, ອົງການຈັດຕັ້ງໃດ, ກອງທະຫານ, ຕຳຣວດ ແລະ ອົງການປົກຄອງ ບໍ່ວ່າ ຂັ້ນໃດ ສວຍໃຊ້ສິດອຳນາດຂອງຕົນ ໄປປາບປາມ ປະຊາຊົນ ໃນການໃຊ້ສິດເສຣີພາບ ປະຊາທິປະໄຕ ຂອງເຂົາເຈົ້າ ເພື່ອ ສະແດງຄວາມຄິດເຫັນ ຂອງຕົນ ຕໍ່ ບັນຫາຕ່າງໆ ຂອງ ປະເທດຊາດ ບ້ານເມືອງ. ຫ້າມເດັດຂາດບໍ່ໃຫ້ມີການແຕະຕ້ອງເຖິງ ຊີວິດ, ຊັບສິນ ແລະ ສິດເສຣີພາບ ປະຊາທິປະໄຕ ຂອງປະຊາຊົນ. ການກະທຳໃດໆ ບໍ່ວ່າ ຂອງ ບຸກຄົນໃດ ຫລື ຂອງ ອົງການຈັດຕັ້ງໃດໆ ທີ່ລ່ວງລະເມີດ ສິດເສຣີພາບ ປະຊາທິປະໄຕ ຂອງ ປະຊາຊົນນັ້ນ ລ້ວນແຕ່ ຈະຖືກລົງໂທດຢ່າງເຂັ້ມງວດ.

## ພາກສີ່

## ວ່າດ້ວຍ ການເຮັດໃຫ້ ນະຄອນຫລວງພຣະບາງ ແລະ ນະຄອນວຽງຈັນ ເປັນກາງ

ມາດຕາ ໑໐-

ເພື່ອ ປະຕິບັດຕາມ ມາດຕາ ໙ ຂອງ ສັນຍາ, ຮັບປະກັນ ຄວາມປອດໄພ ແລະ ສ້າງຄວາມສະດວກ ທຸກປະການ ໃຫ້ແກ່ການເຄື່ອນໄຫວ ຂອງ ຣັຖບານປະສົມຊົ່ວຄາວແຫ່ງຊາດ ແລະ ຂອງ ຄນະມົນຕີປະສົມການເມືອງແຫ່ງຊາດ ຕລອດ ຂອງ ຂ້າຣາຊການ ແລະ ພນັກງານທຸກຄົນ ຂອງ ສອງຝ່າຍ, ເພື່ອ ສ້າງທຸກເງື່ອນໄຂອັນສະດວກ ໃຫ້ແກ່ການປະຕິບັດສັນຍາ ທີ່ໄດ້ເຊັນກັນ ແລະ ເພື່ອປົກປັກຮັກສາ ສັນຕິພາບ ແລະ ຄວາມຖືກຕ້ອງ ປອງດອງຊາດ ໄວ້ເທິງມານ ແລະ ຕລອດການນັ້ນ, ການເຮັດໃຫ້ ນະຄອນ

ຫລວງພຣະບາງ ແລະ ນະຄອນວຽງຈັນ ເປັນກາງ ຈະໄດ້ຮັບການປະຕິບັດ ຕາມບັນດາຫລັກການ ດັ່ງນີ້: ໃຫ້ ນະຄອນທັງສອງນີ້ ມີການຮັບປະກັນ ວ່າ ຈະບໍ່ມີໄພ ອັນຕລາຍໃດໆ ໃຫ້ແກ່ຄົນ ຂອງ ທັງສອງຝ່າຍ, ໃຫ້ທັງສອງຝ່າຍ ມີໜ້າທີ່ພ້ອມກັນຮັບຜິດຊອບໃນການປົກຄອງ ແລະ ໃນການຮັກສາຄວາມປອດໄພ ຂອງ ນະຄອນທັງສອງ, ເຮັດໃຫ້ອຳນາດ ການປົກຄອງ ໃນ ນະຄອນທັງສອງ ເປັນກາງ ຢ່າງແທ້ຈິງ ແລະ ໃຫ້ ນະຄອນທັງສອງນີ້ ໄດ້ຮັບການປ້ອງກັນ ຈາກ ກຳລັງຂອງທັງສອງຝ່າຍ.

ກ) ອຳນາດການປົກຄອງ ຂອງນະຄອນຫລວງພຣະບາງ ແລະ ນະຄອນວຽງຈັນຕ້ອງປະຕິບັດສັນຍາ ຟື້ນຟູ ສັນຕິພາບ ແລະ ປະຕິບັດ ຄວາມຖືກຕ້ອງ ປອງດອງຊາດແລະຣະບຽບການ ວ່າດ້ວຍການເຮັດໃຫ້ນະຄອນ ທັງສອງເປັນກາງນີ້ ຢ່າງຖືກຕ້ອງຄົບຖ້ວນແລະເຂັ້ມງວດ, ປະຕິບັດ ບັນດາສິດເສຣີພາບ ປະຊາທິປະໄຕ ຂອງປະຊາຊົນ ຢ່າງເຄັ່ງຄັດ; ເຮັດທຸກສິ່ງ ທຸກຢ່າງ ເພື່ອບໍ່ໃຫ້ມີການຝືນຕໍ່ສິດເສຣີພາບ ປະຊາທິປະໄຕຂອງປະຊາຊົນ, ເພື່ອຍຸບເລີກ ທຸກການຈັດຕັ້ງ ນັກລືບ ສອດແນມ ແລະຂັບໄລ່ພວກນັກສືບແນວທີຫ້າ ຂອງປະເທດນອກ ທີ່ເປັນອັນຕຣາຍ ຕໍ່ຄວາມເປັນຣະບຽບ ຮຽບຮ້ອຍ ແລະຕໍ່ຄວາມສງົບຂອງນະຄອນທັງສອງ ແລະຕໍ່ການເຄື່ອນໄຫວ ຂອງຣັຖບານປະສົມຊົ່ວຄາວແຫ່ງຊາດ ແລະຂອງຄນະມົນຕີປະສົມການເມືອງແຫ່ງຊາດນັ້ນ ອອກຈາກນະຄອນທັງສອງນີ້ ໂດຍທັນທີ.

– ເຈົ້າຄອງກຳແພງ ແລະຮອງເຈົ້າຄອງກຳແພງນະຄອນຫລວງພຣະບາງ ແລະນະຄອນວຽງຈັນ ແລະບັນດາເຈົ້າເມືອງ ແລະຮອງເຈົ້າເມືອງ ຂອງກຳແພງນະຄອນທັງສອງນີ້ ໃຫ້ແມ່ນຜູ້ທີ່ເຫັນດີ ເຫັນພ້ອມນຳ ສັນຕິພາບ, ເອກະຣາຊ, ຄວາມເປັນກາງ ແລະປະຊາທິປະໄຕຊຶ່ງຄນະປະສົມສູນກາງ ເຫັນດີ ເຫັນພ້ອມນຳກັນ.

ຂ) ຢູ່ໃນນະຄອນທັງສອງນີ້, ທັງສອງຝ່າຍ ຈັດຕັ້ງຕຳຣວຈປະສົມດ້ວຍກຳລັງຂອງທັງສອງຝ່າຍ ທີ່ມີຈຳນວນພົນ ແລະ ການປະກອບເທົ່າທຽມກັນ: ຢູ່ວຽງຈັນ, ກຳລັງຕຳຣວຈ ຂອງແຕ່ລະຝ່າຍແມ່ນ ໑.໐໐໐ (ໜຶ່ງພັນ)ຄົນ, ຢູ່ຫລວງພຣະບາງ, ແຕ່ລະຝ່າຍແມ່ນ ໕໐໐ (ຫ້າຮ້ອຍ)ຄົນ.

ກຳລັງຕຳຣວຈ ປະສົມ ພ້ອມກັນປະຕິບັດວຽກງານ ດັ່ງລຸ່ມນີ້:

– ປົກປັກ ຮັກສາ ຣັຖບານປະສົມຊົ່ວຄາວແຫ່ງຊາດ ແລະຄນະມົນຕີປະສົມການເມືອງແຫ່ງຊາດ ໃນການຢູ່, ການໄປມາ ແລະການປະຕິບັດວຽກງານ, ປົກປັກຮັກສາ ບັນດາ ການ

ປະຊຸມ ແລະພິທີຕ່າງໆ ທີ່ສມາຊິກຂອງຣັຖບານປະສົມຊົ່ວຄາວແຫ່ງຊາດ ແລະຂອງຄນະ ມົນຕີປະສົມການເມືອງແຫ່ງຊາດ ໄປຮ່ວມນຳ

-ລາດຕະເວັນ, ກວດກາ, ເວນຍາມ ແລະດຳເນີນວິທີການອື່ນໆ ເພື່ອຮັບປະກັນຄວາມ ສງົບສຸກ ແລະຄວາມປອດໄພ ຢູ່ນະຄອນທັງສອງ ແລະຮັບປະກັນສິດເສຣີພາບ ປະຊາທິປະ ໄຕ ຂອງປະຊາຊົນ, ກວດກາ ດູແລ ການອອກເຂົ້າ ຕົວເມືອງ ຂອງຄົນຕ່າງດ້າວປົກປັກຮັກ ສາສນາມບິນ, ບັນດາສາງ ແລະຊັບສົມບັດທຸກຢ່າງ ຂອງຣັຖ ແລະຊັບສິນ ຂອງປະຊາຊົນ.

-ຕິດຕາມ, ສືບສວນ, ສອບສວນ ບັນດາຄະດີ ທີ່ມີກົນອຸບາຍ, ແລະການເຄື່ອນໄຫວ ທຳຮາຍ, ບັນດາຄະດີ ທີ່ມີກົນອຸບາຍ ແລະການເຄື່ອນໄຫວ ຈະໂຄ່ນລົ້ມຣັຖບານປະສົມຊົ່ວ ຄາວແຫ່ງຊາດ ແລະຄນະມົນຕີປະສົມການເມືອງແຫ່ງຊາດ, ບັນດາຄະດີປອງທຳຮ້າຍຊີວິດ ຂອງພນັກງານຂັ້ນນຳ ແລະພນັກງານປະຕິບັດວຽກງານ ຂອງທັງສອງຝ່າຍ ແລະບັນດາ ຄະດີທີ່ມີກົນອຸບາຍ ແລະການເຄື່ອນໄຫວ ທີ່ລະເມີດສິດເສຣີພາບ ປະຊາທິປະໄຕຂອງປະຊາ ຊົນຢູ່ໃນນະຄອນທັງສອງນີ້.

ຄ) ຢູ່ໃນນະຄອນທັງສອງນີ້ ແຕ່ລະຝ່າຍຈັດວາງກຳລັງທະຫານ ຂອງໃຜລາວ ໂດຍ ມີຈຳນວນ ແລະການປະກອບອາວຸດ ເທົ່າທຽມກັນ, ສົມທົບກັນ ປ້ອງກັນ ນະຄອນທັງສອງ ຕ້ານທຸກກົນອຸບາຍ ແລະການເຄື່ອນໄຫວ ໂຄ່ນລົ້ມ ຈາກພາຍໃນ ຫລືພາຍນອກ ເຂົ້າມາ.

ກຳລັງປ້ອງກັນ ນະຄອນຫລວງວຽງຈັນ ແລະນະຄອນຫລວງພຣະບາງ ມີດັ່ງນີ້:

ສຳຣັບນະຄອນວຽງຈັນ: ຝ່າຍຣັຖບານວຽງຈັນ ໑ ກອງພັນ

ຝ່າຍບັນດາກຳລັງຮັກຊາດ ໑ ກອງພັນ(ນັບທັງກອງຮ້ອຍທີ່ ມີຢູ່ ແລ້ວ).

ສຳຣັບນະຄອນຫລວງພຣະບາງ: ຝ່າຍຣັຖບານວຽງຈັນ ໔ ກອງຮ້ອຍ

ຝ່າຍບັນດາກຳລັງຮັກຊາດ ໔ ກອງຮ້ອຍ.

ກຳລັງຂອງຝ່າຍໃດ ແມ່ນຝ່າຍນັ້ນຄວບຄຸມ ແລະບັງຄັບບັນຊາ ເອົາເອງ. ແຕ່ວ່າ ກອງບັນຊາການກຳລັງປ້ອງກັນ ຂອງທັງສອງຝ່າຍ ຕ້ອງປຶກສາຫາລືເປັນເອກະສັນກັນ ກ່ຽວ ກັບແຜນການຮ່ວມ ໃນການປ້ອງກັນນະຄອນທັງສອງນີ້.

ງ) ນອກຈາກກຳລັງຕຳຣວຈປະສົມ ແລະກຳລັງປ້ອງກັນ ຂອງທັງສອງຝ່າຍທີ່ໄດ້ກຳນົດໄວ້ ຢູ່ໃນມາດຕາ ໑໐ ຂໍ້ (ຂ) ແລະ ຂໍ້ (ຄ) ເທີງນີ້, ກຳລັງປ້ອງກັນພຣະຣາຊວັງ ແລະພວກທະຫານທີ່ເຮັດວຽກຢູ່ ຕາມໂຮງການທະຫານ ຕາມທີ່ສອງຝ່າຍໃນຄນະປະສົມສູນກາງ ເພື່ອປະຕິບັດສັນຍາ ເຫັນດີນຳກັນແລ້ວ, ກຳລັງປະກອບອາວຸດອື່ນໆ ຮ່ວມມີກອງທະຫານຫລວງ ສັງກັດທຸກເລົ່າທະຫານ, ຕຳຣວຈສນາມ ແລະອື່ນໆ ໃຫ້ຖອນອອກຈາກຂອບເຂດນະຄອນທັງສອງ ໃນເວລາອັນໄວ ເທົ່າທີ່ຈະເຮັດໄດ້. ສະເພາະທະຫານປືນໃຫຍ່ແລະທະຫານຍານຍົນ ໃຫ້ຖອນອອກໄປໄກ ນະຄອນທັງສອງຫລາຍກວ່າໝູ່. ຄນະປະສົມສູນກາງເພື່ອປະຕິບັດ ສັນຍາ ຈະເປັນຜູ້ກຳນົດ ການຖອນ ໃນຕົວຈິງ ໃຫ້ແຕ່ລະປະເພດກຳລັງດັ່ງກ່າວນັ້ນ.

ບັນດາກຳລັງປະກອບອາວຸດ ແລະເຄື່ອງປະກອບອາວຸດ, ທີ່ບໍ່ມີໜ້າທີ່ ປົກປັກຮັກສາ ແລະປ້ອງກັນ ນະຄອນຫລວງພຣະບາງ ແລະນະຄອນວຽງຈັນ ນັ້ນ ຫ້າມບໍ່ໃຫ້ເຄື່ອນທີ່ຜ່ານນະຄອນທັງສອງນີ້ ເວັ້ນເສັຽແຕ່ໃນກໍຣະນີ ທີ່ມີຄວາມຕ້ອງການ ຢາກຜ່ານໄປ ສນາມບິນຂອງນະຄອນທັງສອງ ເພື່ອໄປບ່ອນອື່ນ ຫລືໄປເຮັດວຽກບ່ອນອື່ນ, ແຕ່ກໍຕ້ອງແມ່ນຄນະປະສົມສູນກາງ ເພື່ອປະຕິບັດສັນຍາ ເປັນຜູ້ກຳນົດໃຫ້.

ຈ) ຫ້າມບໍ່ໃຫ້ເຮືອບິນລູ້ລົບ ບໍ່ວ່າສນິດໃດ ບິນເວີ່ນເຂດທ້ອງຟ້າ ຂອງນະຄອນທັງສອງ.

ສ) ການປ້ອງກັນໃກ້ສິດ ແລະການປົກປັກຮັກສາ ບໍຣິເວນເຮືອນຢູ່ຂອງບັນດາສມາຊິກຣັຖບາລປະສົມຊົ່ວຄາວແຫ່ງຊາດ ແລະຄນະມົນຕີປະສົມການເມືອງແຫ່ງຊາດ ທີ່ຂຶ້ນກັບຝ່າຍໃດ ແມ່ນກຳລັງຂອງຝ່າຍນັ້ນ ທີ່ຣະບຸໄວ້ຢູ່ໃນ ຂໍ້ (ຂ) ແລະ ຂໍ້ (ຄ) ເທີງນີ້ ເປັນຜູ້ຮັບຜິດຊອບເອົາເອງ.

ຊ) ເພື່ອຮັບປະກັນ ການດຳຣົງ ຊີວິດ ຂອງຕົນ ຢູ່ໃນນະຄອນ ທັງສອງນີ້ ຝ່າຍບັນດາກຳລັງຮັກຊາດ ໃຊ້ພາຫານະລຳລຽງຂົນສົ່ງຕ່າງຫາກ ແລະມີເສັ້ນທາງລຳລຽງ ທາງໜ້າດິນ ແລະທາງອາກາດ ໂດຍແມ່ນຄນະປະສົມສູນກາງ ເພື່ອປະຕິບັດສັນຍາ ກຳນົດໃຫ້.

ຍ) ຢູ່ໃນນະຄອນ ທັງສອງ, ຝ່າຍບັນດາກຳລັງຮັກຊາດ ມີບໍຣິເວນບ້ານພັກ ແລະ

ບໍຣິເວນທີ່ຕັ້ງ ກຳລັງຂອງຕົນຕ່າງຫາກ ຢູ່ສນາມບິນຂອງນະຄອນທັງສອງ ໃຫ້ຝ່າຍບັນດາກຳລັງຮັກຊາດ ມີ ບໍຣິເວນ ສະເພາະ ເຮືອບິນ ຂອງຝ່າຍຕົນ ທັງເປັນບ່ອນຢູ່ ຂອງກຳລັງເວນຍາມ ເຮືອບິນຂອງຕົນ.

໒) ຄນະປະສົມສຸນກາງ ເພື່ອປະຕິບັດ ສັນຍາ ເປັນຜູ້ຮັບຜິດຊອບ ການປະຕິບັດ ເຮັດໃຫ້ນະຄອນຫລວງພຣະບາງ ແລະນະຄອນວຽງຈັນເປັນກາງເປັນຜູ້ຈັດຕັ້ງໜ່ວຍປະສົມຮັບຜິດຊອບ ສະເພາະ ເພື່ອເຮັດໃຫ້ຣະບຽບການວ່າດ້ວຍຄວາມເປັນກາງ ແລະການຮັກສາຄວາມປອດໄພຂອງນະຄອນ ທັງສອງນີ້ ໄດ້ຮັບການປະຕິບັດ.

໓) ບັນດາ ຂໍ້ກຳນົດຢູ່ໃນພາກສີ່ນີ້ ຕ້ອງໄດ້ຮັບການປະຕິບັດພ້ອມໆກັບການສ້າງຕັ້ງຣັຖບານປະສົມຊົ່ວຄາວແຫ່ງຊາດ ແລະ ຄນະມົນຕີປະສົມການເມືອງແຫ່ງຊາດ ໂດຍທັນທີໂລດ.

# ພາກຫ້າ

## ວ່າດ້ວຍການຢຸດຍິງ

ມາດຕາ ໑໑.-

ເພື່ອປະຕິບັດສັນຍາ ຟື້ນຟູສັນຕິພາບ ແລະ ປະຕິບັດຄວາມຖືກຕ້ອງປອງດອງຊາດຢູ່ລາວ, ເຮັດໃຫ້ການຢຸດຍິງ ວັນທີ ໒໒ ກຸມພາ ໑໙໗໓ ເກີດພົນສັກສິດຢ່າງແທ້ຈິງ ແລະຕລອດການໃນທົ່ວພຣະຣາຊອານາຈັກນັ້ນ, ບັນດາກອງບັນຊາການ ກຳລັງປະກອບອາວຸດ ທີ່ຂຶ້ນກັບແຕ່ລະຝ່າຍຢູ່ໃນລາວ ມີໜ້າທີ່ຮັບຜິດຊອບໃນການແນະນຳໃຫ້ທຸກກົມກອງທະຫານຫລວງ ແລະ ຕຳຣວຈ ປະກອບອາວຸດ ທີ່ຂຶ້ນກັບຝ່າຍຕົນ ຕ້ອງເຄົາຣົບ ແລະປະຕິບັດຄຳສັ່ງຢຸດຍິງ ແລະສັນຍາຟື້ນຟູສັນຕິພາບ ແລະປະຕິບັດຄວາມຖືກຕ້ອງປອງດອງຊາດຢູ່ລາວ ພ້ອມທັງບັນດາມາດຕາ ທີ່ກ່ຽວຂ້ອງ ຂອງອະນຸສັນຍາສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ ໑໒.–

ກ) ປະຕິບັດຕາມມາດຕາ ໒ ຂອງສັນຍາຟື້ນຟູສັນຕິພາບ ແລະປະຕິບັດຄວາມ

ຖືກຕ້ອງປອງດອງຊາດຢູ່ລາວ, ຢູ່ໃນບ່ອນທີ່ມີການສູ້ຮົບຍາດແຍ່ງເຂດແດນກັນ ຣະຫວ່າງສອງຝ່າຍ ຈຳຕ້ອງມີການກຳນົດ ຫລັກໝາຍຊົ່ວຄາວກ່ຽວກັບການ ຢຸດຍິງໄວ້ເປັນສຳຄັນ, ແນ່ໃສ່ແຍກກຳລັງຂອງທັງສອງຝ່າຍ ອອກຈາກກັນເພື່ອຫລີກເວັ້ນ ບໍ່ໃຫ້ມີການປະທະກັນ. ຫລັກໝາຍຊົ່ວຄາວນີ້ຈະຖືກເລີກລ້າງ ໃນເມື່ອສອງຝ່າຍຖືກຕ້ອງກັນແລ້ວ.

ຫລັກໝາຍຊົ່ວຄາວກ່ຽວກັບການຢຸດຍິງ ມີດັ່ງລຸ່ມນີ້ :

– ໃນແຂວງ ຫົວຂອງ (ນ້ຳທາ) : ໝາຍໜຶ່ງຫລັກ:

❖ ຫລັກໜຶ່ງ ຢູ່ບໍຣິເວນ ບ້ານປຸ່ງ.

– ໃນແຂວງ ໄຊຍະບຸຣີ : ໝາຍໜຶ່ງຫລັກ:

❖ ຫລັກໜຶ່ງ ຢູ່ບໍຣິເວນ ຫົງສາ.

– ໃນແຂວງ ຫລວງພຣະບາງ : ໝາຍສາມຫລັກ:

❖ ຫລັກໜຶ່ງ ຢູ່ບໍຣິເວນ ປາກອູ.

❖ ຫລັກໜຶ່ງ ຢູ່ບໍຣິເວນບໍ່ແຮ່ (ປາກເຊືອງ).

❖ ຫລັກໜຶ່ງ ຢູ່ບໍຣິເວນ ຫ້ວຍລ້ອງຫວາຍ.

– ໃນແຂວງ ຊຽງຂວາງ : ໝາຍຫົກຫລັກ:

❖ ຫລັກໜຶ່ງ ຢູ່ບໍຣິເວນ ມູສູງ–ນາມ່ານ.

❖ ຫລັກໜຶ່ງ ຢູ່ບໍຣິເວນ ບ້ານນາ.

❖ ຫລັກໜຶ່ງ ຢູ່ບໍຣິເວນ ທິດຕາເວັນອອກ ສາວພານ.

❖ ຫລັກໜຶ່ງ ຢູ່ບໍຣິເວນ ຈອມຈຽງ.

❖ ຫລັກໜຶ່ງ ຢູ່ບໍຣິເວນ ເມືອງອອມ.

❖ ຫລັກໜຶ່ງ ຢູ່ບໍຣິເວນ ປ່າດົງ.

– ໃນແຂວງ ວຽງຈັນ–ປາກຊັນ : ໝາຍສາມຫລັກ:

❖ ຫລັກໜຶ່ງ ຢູ່ບໍຣິເວນ ມູແຊ.

❖ ຫລັກໜຶ່ງ ຢູ່ບໍຣິເວນ ເມືອງເກົ່າບໍຣິຄັນ.

❖ ຫລັກໜຶ່ງ ຢູ່ບໍຣິເວນ ປາກກະດິງ.

– <u>ໃນແຂວງ ຄຳມ່ວນ: ໝາຍສອງຫລັກ:</u>

❖ ຫລັກໜຶ່ງ ຢູ່ບໍລິເວນ ຂົວສອງຫ້ອງ.

❖ ຫລັກໜຶ່ງ ຢູ່ບໍລິເວນ ກອນພະອັງ (ທາງເລກ ໑໘).

– <u>ໃນແຂວງ ສວັນນະເຂດ</u> : ໝາຍສີ່ຫລັກ:

❖ ຫລັກໜຶ່ງ ຢູ່ບໍລິເວນ ລາວໄຜ່.

❖ ຫລັກໜຶ່ງ ຢູ່ບໍລິເວນ ນາຈານ.

❖ ຫລັກໜຶ່ງ ຢູ່ບໍລິເວນ ທິດຕາເວັນຕົກພະລານ

❖ ຫລັກໜຶ່ງ ຢູ່ບໍລິເວນ ສອງຄອນ.

– <u>ໃນແຂວງ ສາລະວັນ ແລະອາປີຄຳທອງ</u> : ໝາຍສອງຫລັກ:

❖ ຫລັກໜຶ່ງ ຢູ່ບໍລິເວນ ສະພາດ–ບຶງຂາມ.

❖ ຫລັກໜຶ່ງ ຢູ່ບໍລິເວນ ດົງເຊໂດນ.

– <u>ໃນແຂວງ ເຊໂດນ-ບໍລິເວນ</u> : ໝາຍສາມຫລັກ:

❖ ຫລັກໜຶ່ງ ຢູ່ບໍລິເວນ ແກ້ງຍາວ.

❖ ຫລັກໜຶ່ງ ຢູ່ບໍລິເວນ ບ້ານອີຕູ່ (ທາງເລກ ໘ບີ).

❖ ຫລັກໜຶ່ງ ຢູ່ບໍລິເວນ ບ້ານຫ້ວຍພາດ (ທິດໄຕ້ ລາວງາມ).

– <u>ໃນແຂວງ ສີທັນດອນ</u> : ໝາຍສອງຫລັກ:

❖ ຫລັກໜຶ່ງ ຢູ່ບໍລິເວນ ນາລານ–ພະໂພ.

❖ ຫລັກໜຶ່ງ ຢູ່ບໍລິເວນ ບ້ານບຸ່ນ.

ລວມທັງໝົດມີ ໘໓ ຫລັກໝາຍ.

ຈຸດທີ່ຈະໝາຍຫລັກຕົວຈິງ ຢູ່ໃນບໍລິເວນດັ່ງກ່າວເທິງນີ້ ແມ່ນຄນະປະສົມສູນກາງເພື່ອປະຕິບັດສັນຍາ ເປັນຜູ້ກຳນົດ ແລະບັນທຶກລົງໃນແຜນທີ່ ທີ່ມີມາດຕາສ່ວນ ໑/໘໕໐.໐໐໐ ຊຶ່ງຈະຕິດແນບມານຳ ອະນຸສັນຍານີ້.

໒) ຖ້າເຫັນວ່າ ຈຳເປັນ ຄນະປະສົມສູນກາງ ເພື່ອປະຕິບັດສັນຍາ ຈະກຳນົດບັນດາຫລັກໝາຍຊົ່ວຄາວ ກ່ຽວກັບການຢຸດຍິງອື່ນໆຕື່ມອີກ ຢູ່ຕາມບ່ອນທີ່ມີກຳລັງປະ

ກອບອາວຸດ ຂອງສອງຝ່າຍ ຍາດແຍ່ງກັນ ຈຶ່ງຈຳເປັນຕ້ອງແຍກອອກໄກກັນ ເພື່ອຫລີກເວັ້ນ ບໍ່ໃຫ້ມີການປະທະກັນ, ໂດຍອີງຕາມຫລັກການ ເອົາເຂດກອດກາ ຂອງແຕ່ລະຝ່າຍມາເປັນພື້ນຖານ.

ໃນເວລາລໍຖ້າ ຄນະປະສົມສູນກາງ ເພື່ອປະຕິບັດສັນຍາ ກຳນົດຫລັກໝາຍຊົ່ວຄາວ ກ່ຽວກັບການຢຸດຍິງ ຢ່າງແທ້ຈິງນັ້ນ, ຜູ້ແທນຂອງກຳລັງປະຈຳທີ່ ຂອງທັງສອງຝ່າຍຕ້ອງພົບກັນ ເພື່ອປຶກສາຫາລື ຊອກຫາວິທີການອັນສັກສິດ ແນໃສ່ຢຸດເຊົາ ແລະສະກັດກັ້ນການປະທະກັນ ຣະຫວ່າງກຳລັງປະກອບອາວຸດ ຂອງສອງຝ່າຍ.

<u>ມາດຕາ ໑໒-</u>

ເພື່ອຮັບປະກັນ ການປະຕິບັດ ການຢຸດຍິງກັບບ່ອນແລະທັງໝົດຢ່າງສົມເຫດຜົນນັ້ນ:

ກ) ກຳລັງປະກອບອາວຸດ ຂອງຝ່າຍບັນດາກຳລັງຮັກຊາດ ທີ່ພວມຍຶດຕັ້ງຢູ່ ບັນດາບໍຣິເວນ ໃນເຂດກອດກາ ຂອງຝ່າຍຣັຖບານ ວຽງຈັນ ຫລືບັນດາ "ກຳລັງປະກອບອາວຸດ ຂອງຝ່າຍຣັຖບານ ວຽງຈັນ" ທີ່ຍັງຕັ້ງຢູ່ບາງທີ່ໝັ້ນ ຢູ່ໃນເຂດກອດກາ ຂອງບັນດາ ກຳລັງຮັກຊາດ ນັ້ນ ໃຫ້ປະຕິບັດຢ່າງເຂັ້ມງວດ ຕາມມາດຕາ ໔ ແລະ ມາດຕາ ໓ ຂອງສັນຍາ, ແລະເຄົາຣົບ ເຂດກອດກາຂອງກັນ.

ຂ) ຄນະປະສົມສູນກາງ ເພື່ອປະຕິບັດສັນຍາ ເປັນຜູ້ກຳນົດຂອບເຂດ ຂອງບັນດາບໍຣິເວນທີ່ຂຶ້ນກັບ ຝ່າຍບັນດາກຳລັງຮັກຊາດ ແລະຂອບເຂດຂອງທີ່ຕັ້ງ ຂອງ "ກຳລັງປະກອບອາວຸດ ຂອງຝ່າຍຣັຖບານວຽງຈັນ" ຄືໄດ້ຣະບຸໄວ້ຢູ່ໃນຂໍ້ ກ ເທິງນີ້.

ຄ) ຄນະປະສົມສູນກາງ ເພື່ອປະຕິບັດສັນຍາ ຍັງຈະກຳນົດແຖບທາງ ເພື່ອສະດວກ ໃຫ້ແກ່ການໄປມາ ແລະລຳລຽງເຄື່ອງ ຂອງບັນດາບໍຣິເວນ ທີ່ຂຶ້ນກັບຝ່າຍບັນດາກຳລັງຮັກຊາດ ຢູ່ໃນເຂດກອດກາ ຂອງຝ່າຍຣັຖບານ ວຽງຈັນ ແລະກຳນົດສາຍການບິນ ລຳລຽງໃຫ້ແກ່ກຸ່ມທີ່ຕັ້ງຂອງ "ກຳລັງປະກອບອາວຸດ ຂອງຝ່າຍຣັຖບານວຽງຈັນ" ຜ່ານເຂດກອດກາ ຂອງບັນດາກຳລັງຮັກຊາດ.

ງ) ທັງສອງຝ່າຍ ເຫັນດີຟື້ນຟູ ການສັນຈອນໄປມາ ຂອງປະຊາຊົນ ຕາມເສັ້ນທາງບົກ ແລະທາງນ້ຳ ເປັນຕົ້ນ ທາງເລກ ໑໓ ແລະຕາມລຳນ້ຳຂອງ ໃນໄລຍະທາງ

ທີ່ຢູ່ໃນເຂດກອດກາ ຂອງແຕ່ລະຝ່າຍ ພ້ອມໆກັບການໂຂະຍານຂອງສະໝາບການ ໃນທົ່ວປະເທດ. ຄນະປະສົມສູນກາງ ເພື່ອປະຕິບັດສັນຍາ ຈະເປັນຜູ້ພິຈາຣະນາບັນຫານີ້.

ມາດຕາ ໑໔ -

ປະຕິບັດຕາມມາດຕາ ໘ ແລະ ມາດຕາ ໓ ຂອງສັນຍາ, ນັບຕັ້ງແຕ່ມີການຢຸດຍິງມີຜົນສັກສິດເປັນຕົ້ນໄປ:

ກ) ຫ້າມບໍ່ໃຫ້ມີການເຄື່ອນທັບ ແລະການເຄື່ອນໄຫວ ທາງທະຫານໃດໆ ທີ່ເປັນປໍຣະປັກຕໍ່ກັນ, ຣ່ວມທັງການເຄື່ອນໄຫວ ກອງປຸ້ນ, ກອງປາບ, ການເຄື່ອນໄຫວ ປະກອບອາວຸດ ແລະສືບຂ່າວ ຢູ່ເທິງໜ້າດິນ ແລະເທິງອາກາດ ຂອງຝ່າຍໜຶ່ງດ້ວຍຈຸດປະສົງຈະບຸກໂຈມຕີ, ທຳລາຍ, ບຽດຢຶດ, ລ່ວງລ້ຳ ຫລືນາບຂູ່ ຈະລ່ວງລ້ຳ ເຂົ້າເຂດກອດກາຂອງອີກຝ່າຍໜຶ່ງ.

ຂ) ຫ້າມບໍ່ໃຫ້ມີການເຄື່ອນໄຫວ ຂອງກອງທັບອາກາດ ຣວມທັງການບິນ ສອດແນມແລະການບິນລຳລຽງຂົນສົ່ງ ທາງທະຫານ ຂອງຝ່າຍໜຶ່ງ ໄປລ່ວງລ້ຳເຂດທ້ອງຟ້າທີ່ຂຶ້ນກັບສິດກອດກາຂອງອີກຝ່າຍໜຶ່ງ. ໃນເວລາບໍ່ທັນມີຂໍ້ກຳນົດກ່ຽວກັບແຖບທາງດັ່ງກ່າວ ເປັນທາງການເທື່ອ ແລະໃນເມື່ອການບິນລຳລຽງ ສະບຽງອາຫານ ຂອງຝ່າຍໜຶ່ງ ຈຳເປັນຕ້ອງບິນຜ່ານເຂດທ້ອງຟ້າທີ່ຂຶ້ນກັບສິດກອດກາຂອງອີກຝ່າຍໜຶ່ງນັ້ນ, ຄນະປະສົມສູນກາງ ເພື່ອປະຕິບັດສັນຍາ ຈະເປັນຜູ້ກຳນົດ ສາຍການບິນ ໃຫ້ແກ່ການບິນແຕ່ລະຖ້ຽວ ດັ່ງກ່າວນີ້.

ຄ) ຫ້າມບໍ່ໃຫ້ໃຊ້ກຳລັງປະກອບອາວຸດ ຣວມທັງຕຳຣວຈ ປະກອບອາວຸດ ໄປບຸກໂຈມຕີປາບປາມ ກຳຣາບນາບຂູ່ແກ້ແຄ້ນ ແລະຈຳແນກການປະພຶດ ຕໍ່ບັນດາຜູ້ຄົນ ທີ່ໄດ້ຣ່ວມມືກັບຝ່າຍອື່ນ ໃນປາງສົງຄາມ, ແລະຫ້າມບໍ່ໃຫ້ແຕະຕ້ອງ ເຖິງຊີວິດ, ຊັບສິນແລະສິດເສຣີພາບ ປະຊາທິປະໄຕ ຂອງປະຊາຊົນ.

# ພາກຫົກ

## ວ່າດ້ວຍການຖອນກອງທະຫານ ແລະ ພນັກງານ ທະຫານຂອງປະເທດນອກ ອອກຈາກລາວ.

ມາດຕາ ໑໕.-

ປະຕິບັດຕາມ ມາດຕາ ໑ (ໜຶ່ງ) ຂໍ້ ຂ, ມາດຕາ ໒ ຂໍ້ ກ ແລະ ມາດຕາ ໔ ຂອງສັນຍາ:

ກ) ກອງທະຫານ ແລະ ພນັກງານທະຫານ ຂອງປະເທດນອກ ຣວມທັງພນັກງານທະຫານ ທີ່ລີ້ຊ້ອນຢູ່ໃນສະຖານທູດ ແລະສະຖານກົງສູນຕ່າງປະເທດ ປະຈຳລາວ, ນອກຈາກພວກທີ່ມີຊື່ຢູ່ໃນບານຊີ ສະຖານທູດ ທີ່ຣຖບານປະສົມຊົ່ວຄາວແຫ່ງຊາດ ຣັບຮູ້ແລ້ວ ຕ້ອງຖອນອອກຈາກລາວໃຫ້ໝົດ.

ຂ) ຄນະປະສົມສູນກາງ ເພື່ອປະຕິບັດສັນຍາ ຈະວາງແຜນການຖອນ ກອງທະຫານ ແລະພນັກງານທະຫານ ຂອງປະເທດນອກ ອອກຈາກລາວ, ເວັ້ນເສັຽແຕ່ອັນທີ່ບົ່ງໄວ້ໃນສັນຍາເຊີແນວ ປີ ໑໙໕໔ ແລະ ປີ ໑໙໖໒ ກ່ຽວກັບລາວ. ແຜນການນີ້ ແບ່ງອອກເປັນ ໓ ງວດ, ແຕ່ລະງວດຫ່າງກັນ ໒໐ (ຊາວ) ວັນ ແລະຕ້ອງສຳເຣັດລົງ ຢ່າງຊ້າທີ່ສຸດ ບໍ່ໃຫ້ກາຍ ໖໐ (ຫົກສິບ) ວັນ ນັບແຕ່ມື້ສ້າງຕັ້ງ ຣຖບານປະສົມຊົ່ວຄາວແຫ່ງຊາດ ແລະຄນະ ກົມມະການ ປະສົມການເມືອງ ແຫ່ງຊາດເປັນຕົ້ນໄປ.

ມາດຕາ ໑໖-

ກ) ປະຕິບັດຕາມມາດຕາ ໓ ຂໍ້ ງ ຂອງສັນຍາ, ຫ້າມເດັດຂາດ ບໍ່ໃຫ້ກອງທະຫານຂອງຝ່າຍໃດ ຝ່າຍໜຶ່ງ ຣັບເອົາອາວຸດ ແລະ ອຸປະກອນສົງຄາມທຸກສນິດ ຂອງປະເທດນອກ; ໃນກໍຣະນີທີ່ຈຳເປັນຕ້ອງ ປ່ຽນອາວຸດ ແລະ ອຸປະກອນສົງຄາມ ທີ່ຖືກເປ່ເພນັ້ນ ຕ້ອງມີການປຶກສາຫາລື ແລະ ຕົກລົງກັນ ຣະຫວ່າງສອງຝ່າຍ;

ຂ) ຣັຖບານປະສົມຊົ່ວຄາວແຫ່ງຊາດ ຫລື ຣັຖບານປະສົມຖາວອນ ແຫ່ງຊາດ ເມື່ອທັງສອງຝ່າຍ ເຫັນພ້ອມ ເປັນເອກະສັນນຳກັນແລ້ວ ຕ້ອງປະຕິບັດ ຢ່າງເຄັ່ງຄັດ ຕາມຂໍ້ມາດຕາ ທີ່ໄດ້ກຳນົດໄວ້ແລ້ວ ຢູ່ໃນສັນຍາເຊີແນວ ປີ ໑໙໕໔ ແລະ ປີ ໑໙໖໒ ກ່ຽວກັບລາວ ວ່າດ້ວຍການຫ້າມບໍ່ໃຫ້ນຳເອົາ ພນັກງານທະຫານ, ກອງທະຫານຫລວງ ແລະ ກອງທະຫານທີ່ບໍ່ແມ່ນທະຫານຫລວງ ຂອງປະເທດນອກ ຫລື ອາວຸດ ແລະ ອຸປະກອນສົງຄາມຕ່າງໆ ຂອງປະເທດນອກ ເຂົ້າມາລາວ.

ຄ) ບໍ່ອະນຸຍາດໃຫ້ ປະເທດນອກ ໃຊ້ດິນແດນ ຂອງພຣະຣາຊອານາຈັກລາວ ໄປແຊກແຊງເຂົ້າວຽກງານ ພາຍໃນ ຂອງ ປະເທດອື່ນ ຢ່າງເດັດຂາດ.

<u>ມາດຕາ ໑໗.</u>

ປະຕິບັດຕາມ ມາດຕາ ໔ ຂອງສັນຍາ:

" ກຳລັງພິເສດ " ທີ່ແມ່ນປະເທດນອກ ເປັນຜູ້ຈັດຕັ້ງ, ປະກອບອາວຸດ ອົບຣົມ ແລະ ບັນຊາການ ຕ້ອງຖືກຍຸບເລີກ; ບັນດາຖານທັບ, ທີ່ຫມັ້ນ ແລະ ພື້ນຖານທາງທະຫານ ຂອງກຳລັງນີ້, ຕ້ອງຖືກລົບລ້າງຖິ້ມຢ່າງສິ້ນເຊີງ.

ຄນະປະສົມສູນກາງ ເພື່ອປະຕິບັດສັນຍາ ເປັນຜູ້ວາງແຜນການຍຸບເລີກກຳລັງພິເສດ ດັ່ງກ່າວແລະລົບລ້າງ ບັນດາຖານທັບ, ທີ່ຫມັ້ນ ແລະພື້ນຖານທາງທະຫານຂອງກຳລັງນີ້. ແຜນການນີ້ ຕ້ອງໃຫ້ສຳເຣັດລົງ ໃນໄລຍະ ເວລາອັນດ່ວນ ໂດຍແມ່ນຄນະປະສົມສູນກາງ ເປັນຜູ້ກຳນົດ.

## ພາກເຈັດ

## ວ່າດ້ວຍການມອບສົ່ງທະຫານ ແລະ ພນັກງານຝ່າຍພົລເຣືອນ ທີ່ຖືກຈັບ ແລະ ຖືກກັກຂັງໃນປາງສົງຄາມ - ວ່າດ້ວຍການຊອກຫາຂ່າວຄາວກ່ຽວກັບ ຜູ້ທີ່ຖືກສູນຫາຍ ໃນປາງສົງຄາມ

<u>ມາດຕາ ໑໘.</u>

ປະຕິບັດ ຕາມມາດຕາ ໔ ຂອງ ສັນຍາ:

ກ) ການມອບສົ່ງ ຜູ້ຄົນທັງໝົດ ບໍ່ວ່າສັນຊາດໃດ ທີ່ຖືກຈັບ ແລະ ຖືກຄຸມຂັງ ຍ້ອນໄດ້ຮ່ວມມື ກັບຝ່າຍກົງກັນຂ້າມ ໃນປາງສົງຄາມນັ້ນ ຈະໄດ້ດຳເນີນ ໄປເປັນ ໓ ງວດ ແລະ ໃຫ້ແລ້ວພ້ອມກັນກັບການ ຖອນກອງທະຫານ ແລະ ພະນັກງານທະຫານ ຂອງປະເທດນອກ ອອກຈາກລາວ.

ຂ) ລຳດັບການມອບສົ່ງ ແຕ່ລະງວດນັ້ນ, ແຕ່ລະຝ່າຍ ຈະຕ້ອງແຈ້ງ ຈຳນວນຄົນທີ່ຈະມອບສົ່ງ, ພາກສ່ວນ, ບ່ອນມອບສົ່ງ ແລະ ເວລາ ມອບສົ່ງ ໃຫ້ຄນະປະສົມສູນກາງ ເພື່ອປະຕິບັດສັນຍາ ຮູ້ລ່ວງໜ້າ ໔໘ ຊົ່ວໂມງ.

ຄ) ພາຍໃນ ໑໕ ວັນ ຫາ ໓໐ ວັນ ນັບແຕ່ມື້ເຊັນອະນຸສັນຍາສບັບນີ້ເປັນຕົ້ນໄປ, ແຕ່ລະຝ່າຍ ຕ້ອງແຈ້ງຈຳນວນຜູ້ຖືກຈັບ ແລະ ຜູ້ຖືກຄຸມຂັງ ໃຫ້ ຄນະປະສົມສູນກາງ ເພື່ອປະຕິບັດສັນຍາ ໂດຍບັນທຶກໃຫ້ແຈ້ງ ກ່ຽວກັບສັນຊາດ, ເປັນທະຫານ ຫລືວ່າ ເປັນພະນັກງານ ພົລເຮືອນ, ພ້ອມທັງບັນຊີລາຍຊື່ ຜູ້ຖືກຈັບ ທີ່ເສັຽຊີວິດໄປແລ້ວ ໃນເວລາຖືກຄຸມຂັງ.

ງ) ຫລັງຈາກການມອບສົ່ງດັ່ງກ່າວ ໄດ້ສຳເຣັດລົງແລ້ວ ແຕ່ລະຝ່າຍ ຕ້ອງແຈ້ງຂ່າວກ່ຽວກັບພວກທີ່ສູນຫາຍໄປ ໃນປາງສົງຄາມ ບໍ່ວ່າສັນຊາດໃດ ຊຶ່ງແຕ່ລະ ຝ່າຍ ສາມາດເກັບກຳໄດ້ ໃຫ້ຄນະປະສົມສູນກາງ ເພື່ອປະຕິບັດສັນຍາ ໄວທີ່ໃດຍິ່ງດີທີ່ນັ້ນ.

ຈ) ການມອບສົ່ງຜູ້ທີ່ຖືກຈັບ ແລະ ຖືກກັກຂັງ ໃນປາງສົງຄາມ ແລະ ການຮວບຮວມເອົາຂ່າວ ທີ່ແຕ່ລະຝ່າຍ ຈະສົ່ງມາໃຫ້ ກ່ຽວກັບບຸກຄົນທີ່ສູນຫາຍ ໃນປາງສົງຄາມນັ້ນ ແມ່ນໜ້າທີ່ ຂອງຄນະປະສົມສູນກາງ ເພື່ອປະຕິບັດສັນຍາ.

– ເມື່ອທັງສອງຝ່າຍ ໃນຄນະປະສົມສູນກາງ ເພື່ອປະຕິບັດສັນຍາ ເຫັນ ວ່າຕ້ອງການຈະຂໍໃຫ້ ຄນະກັມມະການສາກົນຊ່ວຍເຫລືອ ຮ່ວມມືກໍໄດ້.

# ພາກ ແປດ

## ວ່າດ້ວຍການຊ່ວຍເຫລືອ ປະຊາຊົນທີ່ຈຳເປັນຕ້ອງໄດ້ ອົພຍົບໃນປາງສົງຄາມ.

ມາດຕາ ໕໙.-

ປະຕິບັດຕາມ ມາດຕາ ນີ້, ວັກສຸດທ້າຍ ຂໍ້ ຄ ຂອງສັນຍາ, ຝ່າຍຣັຖບານວຽງຈັນ ແລະ ຝ່າຍບັນດາກຳລັງຮັກຊາດ ໄດ້ຕົກລົງເຫັນດີ ປະກາດໃຫ້ປະຊາຊົນ ທີ່ຈຳເປັນຕ້ອງອົພຍົບລີ້ໄພ ໃນປາງສົງຄາມ ແລະ ທີ່ປະສົງຢາກຢູ່ ຫລື ກັບຄືນເມືອບ້ານເກົ່າ ວ່າເຂົາເຈົ້າ ມີສິດເລືອກຢູ່ ຫລື ກັບຄືນເມືອໄດ້ ຢ່າງອິສະຣະ ໂດຍບໍ່ໃຫ້ມີຜູ້ໃດ ໃຊ້ອຳນາດມາບັງຄັບ ຫລື ກີດຂວາງແຕ່ຢ່າງໃດ. ທັງສອງຝ່າຍ ຈະໃຊ້ທຸກວິທີການ ຈົນສຸດຄວາມສາມາດ ເພື່ອຊ່ວຍໃຫ້ເຂົາເຈົ້າ ໄດ້ຢູ່ ຫລື ກັບຄືນບ້ານເກົ່າ ດ້ວຍຄວາມສດວກ ເພື່ອທຳມາຫາກິນ, ເຮັດໃຫ້ຊີວິດການເປັນຢູ່ ຂອງເຂົາເຈົ້າ ກັບຄືນສູ່ສະພາບປົກກະຕິ ໄວທີ່ສຸດເທົ່າທີ່ຈະໄວໄດ້.

ມາດຕາ ໖໐.-

ຄນະປະສົມສູນກາງ ເພື່ອປະຕິບັດສັນຍາ ຈະຕັ້ງໜ່ວຍປະສົມ ຮັບຜິດຊອບສະເພາະກ່ຽວກັບບັນຫານີ້, ຮ່ວມມີກັບຄນະຜູ້ແທນ ຣັຖບານປະສົມຊົ່ວຄາວແຫ່ງຊາດ ແລະ ຄນະມົນຕີ ປະສົມການເມືອງແຫ່ງຊາດ ເພື່ອໄປພິຈາຣະນາ ຢູ່ກັບບ່ອນ ຄົ້ນຄ້ວາຫາວິທີອັນສັກສິດແກ້ໄຂ ຄວາມມຸ້ງມາດປາຖນາ ຂອງເຂົາເຈົ້າ ໃຫ້ເໝາະສົມ, ຊ່ວຍເຫລືອ ແລະສ້າງເງື່ອນໄຂອັນສະດວກໃຫ້ເຂົາເຈົ້າ ໄດ້ຢູ່ ຫລື ກັບຄືນບ້ານເດີມ ຂອງຕົນ ແລະ ເຮັດໃຫ້ຊີວິດການເປັນຢູ່ ຂອງເຂົາເຈົ້າ ເປັນປົກກະຕິ ແລະ ດີຂຶ້ນໂດຍໄວ.

# ພາກເກົ້າ

## ວ່າດ້ວຍການຈັດຕັ້ງ ການປະຕິບັດສັນຍາ, ການ ຄວບຄຸມກວດກາ ແລະ ອື່ນໆ

ມາດຕາ ໒໑.-

ກ) ຕາມມາດຕາ ໑໑ ຂອງສັນຍາ, ການປະຕິບັດສັນຍາ ແລະ ອະນຸສັນຍາສບັບນີ້ ແມ່ນໜ້າທີ່ຮັບຜິດຊອບຂອງລາວ ທັງສອງຝ່າຍ ເປັນຕົ້ນຕໍ. ທັງສອງຝ່າຍຕົກລົງ ສ້າງຕັ້ງ ຄນະປະສົມ ເພື່ອປະຕິບັດສັນຍາ ອັນສຸມກາງຂຶ້ນຢູ່ວຽງຈັນ ໂດຍໃຫ້ເອີ້ນຫຍໍ້ວ່າ ຄນະປະສົມສຸມກາງ.

ຂ) ຄນະປະສົມສຸມກາງ ມີໜ້າທີ່ ປະສານງານ ຣະຫວ່າງສອງຝ່າຍ ໃນການປະຕິບັດ ແລະ ແນະນຳການປະຕິບັດ ບັນດາ ຂໍ້ມາດຕາ ຂອງສັນຍາ ຟື້ນຟູສັນຕິພາບ ແລະ ປະຕິບັດ ຄວາມຖືກຕ້ອງປອງດອງຊາດ ແລະ ຂອງອະນຸສັນຍາສບັບນີ້. ລາຍລະອຽດ ມີຄື :

– ບັນດາຂໍ້ມາດຕາ ວ່າດ້ວຍການເຮັດໃຫ້ນະຄອນຫລວງພຣະບາງ ແລະ ນະຄອນວຽງຈັນ ເປັນກາງ; ບັນດາຂໍ້ມາດຕາ ວ່າດ້ວຍການຢຸດຍິງ; ບັນດາຂໍ້ມາດຕາ ວ່າດ້ວຍການຖອນທະຫານ ແລະ ພນັກງານທະຫານ ຂອງປະເທດນອກ ອອກຈາກລາວ, ບັນດາຂໍ້ມາດຕາ ວ່າດ້ວຍການຫ້າມ ບໍ່ໃຫ້ນຳເອົາ ກອງທະຫານ ແລະ ພນັກງານທະຫານ ຂອງປະເທດນອກ ພ້ອມທັງອາວຸດ ແລະ ອຸປະກອນສົງຄາມ ຂອງປະເທດນອກເຂົ້າມາລາວ, ແລະ ບັນດາຂໍ້ມາດຕາ ອື່ນ ໆ ທາງດ້ານການທະຫານ.

– ບັນດາຂໍ້ມາດຕາ ວ່າດ້ວຍການປະຕິບັດ ບັນດາສິດເສຣີພາບ ປະຊາທິປະໄຕ ຂອງປະຊາຊົນ, ວ່າດ້ວຍການພົວພັນ ອັນເປັນປົກະຕິ ຣະຫວ່າງສອງເຂດ, ວ່າດ້ວຍການຫ້າມ ບໍ່ໃຫ້ມີການຈຳແນກແກ້ແຄ້ນ ຕໍ່ຜູ້ທີ່ໄດ້ຮ່ວມມືກັບຝ່າຍອື່ນ ໃນປາງສົງຄາມ, ບັນດາຂໍ້ມາດຕາ ວ່າດ້ວຍການຊ່ວຍເຫລືອປະຊາຊົນ ທີ່ຖືກຈຳເປັນ ຕ້ອງໄດ້ອົພຍົບໃນປາງສົງຄາມ ໃຫ້ໄດ້ກັບຄືນບ້ານເກົ່າ ແລະ ອື່ນ ໆ.

ຄນະປະສົມສູນກາງ ມີໜ້າທີ່ຕິດຕາມ, ຊອກໃຫ້ເຫັນ, ສະກັດກັ້ນ, ສືບສວນ ແລະ ແກ້ໄຂ ບັນດາລະເມີດ ບັນດາຂໍ້ມາດຕາ ຂອງສັນຍາ ແລະ ຂອງອະນຸສັນຍາສບັບນີ້.

ຄນະປະສົມສູນກາງ ຍັງມີໜ້າທີ່ ປະສານງານ ຣະຫວ່າງສອງຝ່າຍ ໃນການປະຕິບັດ ແລະ ແນະນຳການປະຕິບັດ ຕາມຂໍ້ກຳນົດອື່ນໆ ຊຶ່ງສອງຝ່າຍ ໄດ້ຕົກລົງກັນ.

ຄ) ຄນະປະສົມສູນກາງຮ່ວມມີ ຜູ້ຕາງໜ້າ ຂອງສອງຝ່າຍ ຊຶ່ງມີຈຳນວນເທົ່າກັນ. ຄນະຜູ້ຕາງໜ້າ ຂອງແຕ່ລະຝ່າຍ ມີຫົວໜ້າຄນະໜຶ່ງທ່ານ, ຮອງຫົວໜ້າຄນະໜຶ່ງ ທ່ານ ແລະ ກັມມະການອີກ ໕ (ຫ້າ) ທ່ານ.

ງ) ຈຳນວນພນັກງານ ຊ່ວຍວຽກ, ຜູ້ຊ່ຽວຊານ ແລະ ໜ່ວຍປ້ອງກັນໄກ້ສິດ ຂອງຄນະຜູ້ຕາງໜ້າ ແຕ່ລະຝ່າຍ ທີ່ປະຈຳຢູ່ນຳ ຄນະປະສົມສູນກາງນັ້ນ ບໍ່ໃຫ້ກາຍຝ່າຍລະ ໑໐໐ (ໜຶ່ງຮ້ອຍ) ຄົນ.

<u>ມາດຕາ ໖໖.-</u>

ກ) ອີງໃສ່ຄວາມຕ້ອງການ ຂອງການປະຕິບັດສັນຍາ, ຄນະປະສົມສູນກາງ ຈັດຕັ້ງ ບັນດາໜ່ວຍປະສົມເຄື່ອນທີ່ ຈຳນວນໜຶ່ງ.

ຂ) ອີງຕາມມາດຕາ ໑໐ ຂອງອະນຸສັນຍາ, ຄນະປະສົມສູນກາງ ຈັດຕັ້ງໜ່ວຍປະສົມສອງໜ່ວຍ ຮັບຜິດຊອບສະເພາະ ການເຮັດໃຫ້ນະຄອນຫລວງພຣະບາງ ແລະ ນະຄອນວຽງຈັນ ເປັນກາງ, ໜ່ວຍປະສົມທີ່ຮັບຜິດຊອບນະຄອນໃດ ໃຫ້ປະຈຳຢູ່ນະຄອນນັ້ນ.

ຄ) ແຕ່ລະໜ່ວຍປະສົມ ທີ່ກ່າວມານັ້ນ ຮ່ວມມີ ຜູ້ຕາງໜ້າ ຂອງສອງຝ່າຍ ໂດຍມີຈຳນວນເທົ່າກັນ, ຄື ຝ່າຍລະສາມຄົນ ໃນນັ້ນມີຫົວໜ້າໜ່ວຍຜູ້ໜຶ່ງ.

ງ) ຈຳນວນພນັກງານຊ່ວຍວຽກ ແລະ ຜູ້ປ້ອງກັນໄກ້ສິດ ຂອງແຕ່ລະຝ່າຍ ຢູ່ໃນແຕ່ລະໜ່ວຍປະສົມນັ້ນ ບໍ່ໃຫ້ກາຍ ຝ່າຍລະ ໔໐ ຄົນ.

<u>ມາດຕາ ໖໗.-</u>

ກ) ຄນະປະສົມສູນກາງ ແລະ ບັນດາໜ່ວຍປະສົມ ເຮັດວຽກຕາມຫລັກການ ເຈຣະຈາ ຫາລືກັນ ຈົນກ້າວເຖິງຂັ້ນ ເປັນເອກະສັນກັນ ບົນຈິດໃຈສເມີພາບ ແລະ ເຄົາຣົບຊຶ່ງກັນແລະກັນ. ໃນກໍຣະນີ ທີ່ບໍ່ເປັນເອກະສັນກັນນັ້ນ ແຕ່ລະຝ່າຍ ລາຍງານຂຶ້ນຫາ ຫົວໜ້າ

ສູງສຸດ ຂອງໃຜລາວ ຫລື ຜູ້ຕາງໜ້າຂອງເພິ່ນ ເພື່ອຊອກຫາ ວິທີແກ້ໄຂ ໃຫ້ທັນເວລາ.

ຂ) ຄນະປະສົມສູນກາງ ແລະ ບັນດາໜ່ວຍປະສົມ ໂຮມປະຊຸມກັນ ຕາມກຳນົດເປັນປົກກະຕິ. ຜູ້ຕາງໜ້າ ຂອງແຕ່ລະຝ່າຍ ຢູ່ໃນຄນະປະສົມສູນກາງ ແລະ ຢູ່ໃນໜ່ວຍປະສົມຕ່າງ ໆ ມີສິດຮຽກໂຮມປະຊຸມ ວິສາມັນ ຂອງຄນະປະສົມສູນກາງ ແລະ ຂອງໜ່ວຍປະສົມຕ່າງ ໆ ເພື່ອປຶກສາຫາລືວຽກງານ ໃຫ້ຕອບສນອງກັບຄວາມຕ້ອງການ ຂອງສພາບການໃຫ້ທັນເວລາ.

<u>ມາດຕາ ໒໔.-</u>

ກ) ທັງສອງຝ່າຍມີໜ້າທີ່ ຮັບຜິດຊອບ ໃນການຮັບປະກັນຄວາມປອດໄພ ແລະ ໃນການຊ່ວຍເຫລືອໃຫ້ຄວາມສດວກ ແກ່ຄນະປະສົມສູນກາງ ແລະ ໜ່ວຍປະສົມອື່ນ ໆ ໃນເວລາປະຕິບັດ ໜ້າທີ່ຂອງຕົນ.

ຄນະປະສົມສູນກາງ ແລະ ໜ່ວຍປະສົມຕ່າງໆທີ່ໄປຕັ້ງຢູ່, ຫລືເຄື່ອນໄຫວໃນເຂດກວດກາ ຂອງຝ່າຍໃດ, ຝ່າຍນັ້ນມີໜ້າທີ່ຮັບຜິດຊອບ ຮັບປະກັນຄວາມປອດໄພ ຢ່າງເດັດຂາດໃຫ້ແກ່ເຂົາເຈົ້າ, ພ້ອມກັນນັ້ນກໍ່ຮັບຜິດຊອບ ແກ້ໄຂບັນຫາເຮືອນຢູ່ ອຸປະກອນຕ່າງໆ ຫລືພາຫານະອັນຈຳເປັນ ໃນການໄປມາແລະໃນການເຮັດວຽກ, ສ້າງທຸກເງື່ອນໄຂອັນສດວກໃຫ້ແກ່ວຽກງານ ແລະການດຳຣົງຊີວິດຂອງເຂົາເຈົ້າ.

ຂ) ຄນະປະສົມສູກກາງ ແລະ ບັນດາໜ່ວຍປະສົມ, ພນັກງານຂອງຄນະ ແລະ ຂອງໜ່ວຍປະສົມຕ່າງໆ ໄດ້ຮັບອະພິສິດແລະການຍົກເວັ້ນຕ່າງໆ ຄືກັນກັບບັນດາຄນະທູດ ແລະພນັກງານການທູດທຸກປະການ. ໃນເວລາປະຕິບັດໜ້າທີ່ນັ້ນ, ພນັກງານຂອງຄນະແລະຂອງໜ່ວຍປະສົມຕ່າງໆ ມີສິດໄປມາ, ພົບປະກັບປະຊາຊົນ ແລະ ນັກໜັງສືພິມໄດ້ຢ່າງເສຣີ.

ຄ) ພນັກງານຂອງແຕ່ລະຝ່າຍ ຢູ່ໃນຄນະປະສົມສູນກາງ ແລະ ຢູ່ໃນໜ່ວຍປະສົມຕ່າງໆ ມີສິດຖືປືນສັ້ນເຄື່ອງແບບ ແລະເຄື່ອງໝາຍສະເພາະຂອງຝ່າຍຕົນ, ນອກຈາກນັ້ນຈະໄດ້ຖືເຄື່ອງໝາຍຮ່ວມ ໂດຍແມ່ນຄນະປະສົມສູນກາງເປັນຜູ້ກຳນົດ. ໃນເວລາປະຕິບັດໜ້າທີ່, ກຳລັງປ້ອງກັນຂອງແຕ່ລະຝ່າຍ ຢູ່ໃນຄນະປະສົມສູນກາງ ແລະຢູ່ໃນໜ່ວຍປະສົມ

ຕ່າງໆ ມີສິດຖືອາວຸດທີ່ຈຳເປັນຕາມຄວາມຕົກລົງ ຂອງຄນະປະສົມສູນກາງ.

<u>ມາດຕາ ໒໕-</u>

ອີງຕາມມາດຕາ ໑໒ ຂອງສັນຍາ, ຄນະກັມມະການສາກົນປະຈຳລາວ ຈະສືບຕໍ່ການເຄື່ອນໄຫວຂອງຕົນ ໂດຍມີການພົວພັນແລະ ມີການຮ່ວມມືຢ່າງແໜ້ນແຟ້ນ ກັບຄນະປະສົມສູນກາງ ແລະຖືກຕາມຂອບເຂດສິດໜ້າທີ່ ແລະຫລັກການເຮັດວຽກ ທີ່ໄດ້ກຳນົດໄວ້ຢູ່ໃນອະນຸສັນຍາ ຂອງສັນຍາເຈນີວປີ ໑໙໖໒ ກ່ຽວກັບລາວ.

ກ) ຄນະກັມມະການສາກົນ ຈະປະຕິບັດໜ້າທີ່ ໃນການຄວບຄຸມແລະກວດກາ ການຢຸດຍິງຢູ່ລາວດ້ວຍຄວາມເຫັນດີ ເຫັນພ້ອມຂອງທັງສອງຝ່າຍຢູ່ລາວ, ເພາະວ່າການປະຕິບັດການຢຸດຍິງ ແມ່ນໜ້າທີ່ຮັບຜິດຊອບ ຂອງສອງຝ່າຍຢູ່ລາວ. ຄນະກັມມະການສາກົນປະຕິບັດໜ້າທີ່ຂອງຕົນ ໃນການຄວບຄຸມແລະກວດກາການຢຸດຍິງ ໂດຍຮ່ວມມືຢ່າງແໜ້ນແຟ້ນກັບຄນະປະສົມສູນກາງໃນຂອບເຂດ ຂອງຂໍ້ກຳນົດກ່ຽວກັບການຢຸດຍິງ ຊຶ່ງທັງສອງຝ່າຍໄດ້ຕົກລົງເປັນເອກະສັນກັນແລ້ວ.

ຂ) ຄນະກັມມະການສາກົນ ຈະຄວບຄຸມແລະກວດກາການຖອນກອງທະຫານ ແລະພນັກງານທະຫານ ຂອງປະເທດນອກ ອອກຈາກລາວ.ບັນດາໜ່ວຍກວດກາຂອງຄນະກັມການສາກົນ ທີ່ຖືກແຕ່ງຕັ້ງ ເພື່ອຈຸດປະສົງດັ່ງກ່າວນັ້ນຈະໄປຮ່ວມຢູ່ບ່ອນຖອນກອງທະຫານຕາມວັນເວລາຊຶ່ງຄນະປະສົມສູນກາງ ຈະໄດ້ແຈ້ງໃຫ້ຊາບຢ່າງຊ້າກ່ອນ ໔໘ ຊົ່ວໂມງ.

ຄ) ຄນະກັມມະການ ສາກົນ ຈະສືບສວນ ກໍຣະນີທີ່ມີຫລັກຖານ ພຽງພໍ ຢັ້ງຢືນວ່າໄດ້ມີຄະດີຣະເມີດ ມາດຕາ ໒ ຂໍ້ ກ ແລະ ຂ ແລະມາດຕາ ໓ ຂໍ້ ງ ຂອງສັນຍາດ້ວຍຄວາມເຫັນດີ ເຫັນພ້ອມ ຫລືຕາມຄຳຮ້ອງຂໍ ຢ່າງເປັນເອກະສັນ ຣະຫວ່າງສອງຝ່າຍ ໃນຄນະປະສົມສູນກາງ.

ງ) ຄນະກັມມະການສາກົນ ຈະປະຕິບັດ ຕາມສິດ ແລະໜ້າທີ່ຂອງຕົນດັ່ງໄດ້ກຳນົດໄວ້ ຢູ່ໃນອະນຸສັນຍາ ຂອງສັນຍາເຈນີວປີ ໑໙໖໒ ກ່ຽວກັບລາວ ແລະໄດ້ເວົ້າແຈ້ງຕື່ມ ຢູ່ໃນມາດຕາ ໒໕ ຂໍ້ ກ, ຂ ແລະ ຄ ຂອງອະນຸສັນຍານີ້ ໂດຍມີການຮ່ວມມືຢ່າງ.

ແຫມັ້ນແຟ້ນກັບຄນະປະສົມສູນກາງ. ໃນເວລາທີ່ຄນະ ກັມມະການສາກົນ ປະຕິບັດຫນ້າທີ່ຂອງເຂົາເຈົ້ານັ້ນ, ອຳນາດການປົກຄອງ ທຸກໆອັນຢູ່ໃນເຂດກອດກາ ຂອງແຕ່ລະຝ່າຍໃນລາວ ຕ້ອງໃຫ້ການຊ່ອຍເຫລືອ ຢ່າງເຕັມທີ່ ແກ່ຄນະກັມມະການສາກົນ ແລະຫນ່ວຍກອດກາຕ່າງໆ ຂອງຄນະກັມມະການສາກົນ ຕາມເງື່ອນໄຂຂອງຕົນ ແລະໃຊ້ທຸກວິທີການອັນຈຳເປັນ ເພື່ອຮັບປະກັນຄວາມປອດໄພ ໃຫ້ແກ່ຄນະກັມມະການສາກົນ ຫລືຫນ່ວຍກອດກາຕ່າງໆ ຂອງຄນະກັມມະການສາກົນ ໃນເວລາເຂົາເຈົ້າເຄື່ອນໄຫວ ປະຕິບັດຫນ້າທີ່.

ຈ) ນອກຈາກນັ້ນ ຄນະກັມມະການສາກົນ ຈະໃຫ້ຄວາມຊ່ອຍເຫລືອ ຮ່ວມໄມ້ຮ່ວມມື ທີ່ຈຳເປັນແກ່ສອງຝ່າຍລາວ ໃນວຽກການອື່ນ ທີ່ເປັນປະໂຍດ ແກ່ການປະຕິບັດສັນຍາຟື້ນຟູ ສັນຕິພາບ ແລະປະຕິບັດຄວາມຖືກຕ້ອງປອງດອງຊາດ ຢູ່ລາວ ຕາມຄຳຮ້ອງຂໍອັນເປັນເອກະສັນ ຂອງຄນະປະສົມສູນກາງ ເພື່ອປະຕິບັດສັນຍາ.

ມາດຕາ ໒໖-

ທັງສອງຝ່າຍຈະພ້ອມກັນຊຸກຍູ້ ໃຫ້ຣັຖບານປະສົມຊົ່ວຄາວແຫ່ງຊາດ ປະຕິບັດມາດຕາ ໑໐ ຂໍ້ ຄ ຂອງສັນຍາວຽງຈັນ ວັນທີ ໒໑ ກຸມພາ ໑໙໗໓ ໃຫ້ໄດ້ຮັບຜົນດີ.

ມາດຕາ ໒໗.

ທັງສອງຝ່າຍ ໃຫ້ຄຳຫມັ້ນສັນຍາວ່າ ຈະປະຕິບັດ ສັນຍາກ່ຽວກັບການຟື້ນຟູ ສັນຕິພາບ ແລະປະຕິບັດຄວາມຖືກຕ້ອງ ປອງດອງຊາດຢູ່ລາວ ແລະອະນຸສັນຍາສບັບນີ້ຢ່າງເຂັ້ມງວດ, ແລະຈະສືບຕໍ່ປຶກສາຫາລື ກ່ຽວກັບວິທີການຕົວຈິງ ອັນສັກສິດ ເພື່ອປະຕິບັດທຸກຂໍ້ມາດຕາ ທີ່ໄດ້ເຊັນກັນ, ຕັ້ງຫນ້າສະກັດກັ້ນ ແລະແກ້ໄຂບັນດາ ກໍຣະນີຣະເມີດຕໍ່ສັນຍາ ແລະອະນຸສັນຍານີ້ ຢ່າງທັນການ ແລະຖືກຕ້ອງ, ພ້ອມກັນນັ້ນ ກໍຈະສືບຕໍ່ປຶກສາຫາລືກັນ ເພື່ອແກ້ໄຂບັນດາ ບັນຫາທີ່ຍັງຄົງຄ້າງນັ້ນ ຢ່າງສົມເຫດສົມຜົນ ດ້ວຍຈິດໃຈສເມີພາບ, ເຄົາຣົບຊຶ່ງກັນແລະກັນ, ແລະຖືກຕ້ອງປອງດອງກັນ.

ມາດຕາ ໒໘ -

ອະນຸສັນຍາສບັບນີ້ ມີຜົນສັກສິດ ນັບແຕ່ມື້ໄດ້ເຊັນກັນ ເປັນຕົ້ນໄປ.

ຕ່າງໆ ມີສິດຖືອາວຸດທີ່ຈຳເປັນຕາມຄວາມຕົກລົງ ຂອງຄນະປະສົມສູນກາງ.

ມາດຕາ ໒໕-

ອີງຕາມມາດຕາ ໑໘ ຂອງສັນຍາ, ຄນະກັມມະການສາກົນປະຈຳລາວ ຈະສືບຕໍ່ການເຄື່ອນໄຫວຂອງຕົນ ໂດຍມີການພົວພັນແລະ ມີການຮ່ວມມືຢ່າງແໜ້ນແຟ້ນ ກັບຄນະປະສົມສູນກາງ ແລະຖືກຕາມຂອບເຂດສິດໜ້າທີ່ ແລະຫລັກການເຮັດວຽກ ທີ່ໄດ້ກຳນົດໄວ້ຢູ່ໃນອະນຸສັນຍາ ຂອງສັນຍາເຈີແນວປີ ໑໙໖໘ ກ່ຽວກັບລາວ.

ກ) ຄນະກັມມະການສາກົນ ຈະປະຕິບັດໜ້າທີ່ ໃນການຄວບຄຸມແລະກວດກາ ການຢຸດຍິງຢູ່ລາວດ້ວຍຄວາມເຫັນດີ ເຫັນພ້ອມຂອງທັງສອງຝ່າຍຢູ່ລາວ, ເພາະວ່າການປະຕິບັດການຢຸດຍິງ ແມ່ນໜ້າທີ່ຮັບຜິດຊອບ ຂອງສອງຝ່າຍຢູ່ລາວ. ຄນະກັມມະການສາກົນປະຕິບັດໜ້າທີ່ຂອງຕົນ ໃນການຄວບຄຸມແລະກວດກາການຢຸດຍິງ ໂດຍຮ່ວມມືຢ່າງແໜ້ນແຟ້ນກັບຄນະປະສົມສູນກາງໃນຂອບເຂດ ຂອງຂໍ້ກຳນົດກ່ຽວກັບການຢຸດຍິງ ຊຶ່ງທັງສອງຝ່າຍໄດ້ຕົກລົງເປັນເອກະສັນກັນແລ້ວ.

ຂ) ຄນະກັມມະການສາກົນ ຈະຄວບຄຸມແລະກວດກາການຖອນກອງທະຫານ ແລະພນັກງານທະຫານ ຂອງປະເທດນອກ ອອກຈາກລາວ.ບັນດາໜ່ວຍກວດກາຂອງຄນະກັມການສາກົນ ທີ່ຖືກແຕ່ງຕັ້ງ ເພື່ອຈຸດປະສົງດັ່ງກ່າວນັ້ນຈະໄປຮ່ວມຢູ່ບ່ອນຖອນກອງທະຫານຕາມວັນເວລາຊຶ່ງຄນະປະສົມສູນກາງ ຈະໄດ້ແຈ້ງໃຫ້ຊາບຢ່າງຊ້າກ່ອນ ໔໘ ຊົ່ວໂມງ.

ຄ) ຄນະກັມມະການ ສາກົນ ຈະສືບສວນ ກໍຣະນີທີ່ມີຫລັກຖານ ພຽງພໍ ຢັ້ງຢືນວ່າໄດ້ມີຄະດີຣະເມີດ ມາດຕາ ໘ ຂໍ້ ກ ແລະ ຂ ແລະມາດຕາ ໓ ຂໍ້ ງ ຂອງສັນຍາດ້ວຍຄວາມເຫັນດີ ເຫັນພ້ອມ ຫລືຕາມຄຳຮ້ອງຂໍ ຢ່າງເປັນເອກະສັນ ຣະຫວ່າງສອງຝ່າຍ ໃນຄນະປະສົມສູນກາງ.

ງ) ຄນະກັມມະການສາກົນ ຈະປະຕິບັດ ຕາມສິດ ແລະໜ້າທີ່ຂອງຕົນດັ່ງໄດ້ກຳນົດໄວ້ ຢູ່ໃນອະນຸສັນຍາ ຂອງສັນຍາເຈີແນວປີ ໑໙໖໘ ກ່ຽວກັບລາວ ແລະໄດ້ເວົ້າແຈ້ງຕື່ມ ຢູ່ໃນມາດຕາ ໘໕ ຂໍ້ ກ, ຂ ແລະ ຄ ຂອງອະນຸສັນຍານີ້ ໂດຍມີການຮ່ວມມືຢ່າງ.

ແໜ້ນແຟ້ນກັບຄນະປະສົມສູນກາງ. ໃນເວລາທີ່ຄນະ ກັມມະການສາກົນ ປະຕິບັດໜ້າທີ່ຂອງເຂົາເຈົ້ານັ້ນ, ອຳນາດການປົກຄອງ ທຸກໆຂັ້ນຢູ່ໃນເຂດກອດກາ ຂອງແຕ່ລະຝ່າຍໃນລາວ ຕ້ອງໃຫ້ການຊ່ອຍເຫລືອ ຢ່າງເຕັມທີ່ ແກ່ຄນະກັມມະການສາກົນ ແລະໜ່ວຍກອດກາຕ່າງໆ ຂອງຄນະກັມມະການສາກົນ ຕາມເງື່ອນໄຂຂອງຕົນ ແລະໃຊ້ທຸກວິທີການອັນຈຳເປັນ ເພື່ອຮັບປະກັນຄວາມປອດໄພ ໃຫ້ແກ່ຄນະກັມມະການສາກົນ ຫລືໜ່ວຍກອດກາຕ່າງໆ ຂອງຄນະກັມມະການສາກົນ ໃນເວລາເຂົາເຈົ້າເຄື່ອນໄຫວ ປະຕິບັດໜ້າທີ່.

ຈ) ນອກຈາກນັ້ນ ຄນະກັມມະການສາກົນ ຈະໃຫ້ຄວາມຊ່ອຍເຫລືອ ຮ່ວມໄມ້ຮ່ວມມື ທີ່ຈຳເປັນແກ່ສອງຝ່າຍລາວ ໃນວຽກການອື່ນ ທີ່ເປັນປະໂຍດ ແກ່ການປະຕິບັດສັນຍາຟື້ນຟູ ສັນຕິພາບ ແລະປະຕິບັດຄວາມຖືກຕ້ອງປອງດອງຊາດ ຢູ່ລາວ ຕາມຄຳຮ້ອງຂໍອັນເປັນເອກະສັນ ຂອງຄນະປະສົມສູນກາງ ເພື່ອປະຕິບັດສັນຍາ.

ມາດຕາ ໒໖-

ທັງສອງຝ່າຍຈະພ້ອມກັນຊຸກຍູ້ ໃຫ້ຣັຖບານປະສົມຊົ່ວຄາວແຫ່ງຊາດ ປະຕິບັດມາດຕາ ໑໐ ຂໍ້ ຄ ຂອງສັນຍາວຽງຈັນ ວັນທີ່ ໒໑ ກຸມພາ ໑໙໗໓ ໃຫ້ໄດ້ຮັບຜົນດີ.

ມາດຕາ ໒໗.

ທັງສອງຝ່າຍ ໃຫ້ຄຳໝັ້ນສັນຍາວ່າ ຈະປະຕິບັດ ສັນຍາກ່ຽວກັບການຟື້ນຟູ ສັນຕິພາບ ແລະປະຕິບັດຄວາມຖືກຕ້ອງ ປອງດອງຊາດຢູ່ລາວ ແລະອະນຸສັນຍາສບັບນີ້ຢ່າງເຂັ້ມງວດ, ແລະຈະສືບຕໍ່ປຶກສາຫາລື ກ່ຽວກັບວິທີການຕົວຈິງ ອັນສັກສິດ ເພື່ອປະຕິບັດທຸກຂໍ້ມາດຕາ ທີ່ໄດ້ເຊັນກັນ, ຕັ້ງໜ້າສະກັດກັ້ນ ແລະແກ້ໄຂບັນດາ ກໍຣະນີຣະເມີດຕໍ່ສັນຍາ ແລະອະນຸສັນຍານີ້ ຢ່າງທັນການ ແລະຖືກຕ້ອງ, ພ້ອມກັນນັ້ນ ກໍຈະສືບຕໍ່ປຶກສາຫາລືກັນ ເພື່ອແກ້ໄຂບັນດາ ບັນຫາທີ່ຍັງຄົງຄ້າງນັ້ນ ຢ່າງສົມເຫດສົມຜົນ ດ້ວຍຈິດໃຈສເມີພາບ, ເຄົາຣົບຊຶ່ງກັນແລະກັນ, ແລະຖືກຕ້ອງປອງດອງກັນ.

ມາດຕາ ໒໘ -

ອະນຸສັນຍາສບັບນີ້ ມີຜົນສັກສິດ ນັບແຕ່ມື້ໄດ້ເຊັນກັນ ເປັນຕົ້ນໄປ.

ເຮັດທີ່ ວຽງຈັນ, ວັນທີ່ ສິບສີ່ ເດືອນ ກັນຍາ ປີ ໑໙໗໓

ເປັນພາສາລາວ ຈຳນວນ ໕ ສບັບ, ສົ່ງຖວາຍພຣະບາດ ສົມເດັດພຣະເຈົ້າມະຫາຊີວິດ ໑ ສບັບ, ແຕ່ລະຝ່າຍຮັກສາໄວ້ ຝ່າຍລະ ໑ ສບັບ ແລະເກັບມ້ຽນໄວ້ໃນຕູ້ສມຸດ ຂອງຣັຖບານປະສົມຊົ່ວຄາວແຫ່ງຊາດ ແລະຂອງຄນະມົນຕີ ປະສົມການເມືອງແຫ່ງຊາດ ບ່ອນລະ ໑ ສບັບ.

ຜູ້ຕາງໜ້າ ຝ່າຍຣັຖບານ ວຽງຈັນ,

ພຍາ ເພັງ ພົງສວັນ, ຜູ້ຕາງໜ້າພິເສດ

ທີ່ມີອຳນາດເຕັມ ຂອງຣັຖບານ ວຽງຈັນ.

ຫົວໜ້າຄນະຜູ້ແທນຝ່າຍຣັຖບານວຽງຈັນ,

ພຍາ ໂງ່ນ ຊະນະນິກອນ

ຜູ້ຕາງໜ້າ ຝ່າຍຂບວນການຮັກຊາດ,

ພຍາ ພູມີ ວົງວິຈິດ, ຜູ້ຕາງໜ້າພິເສດ

ທີ່ມີອຳນາດເຕັມ ຂອງຂບວນການຮັກຊາດ.

ຫົວໜ້າຄນະຜູ້ແທນຝ່າຍຂບວນການຮັກຊາດ,

ທ່ານ ພູມສີປະເສີດ













ໂຮງພິມ ແຫ່ງຊາດ ວຽງຈັນ